# ທະນາຄານ ໄຊງ່ອນເທືອງຕິ່ນ ລາວ ຈຳກັດ

ເອກະສານລາຍງານການເງິນ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2021

EY

Building a better working world

# ທະນາຄານ ໄຊງ່ອນເທືອງຕິ່ນ ລາວ ຈຳກັດ

**ສາລະບານ**


| | ໜ້າ |
|---|---|
| ຂໍ້ມູນທົ່ວໄປ | 1 - 2 |
| ບົດລາຍງານຂອງຄະນະບໍລິຫານ | 3 |
| ບົດລາຍງານຂອງນັກກວດສອບອິດສະຫຼະ | 4 - 6 |
| ໃບລາຍງານຜົນການດຳເນີນງານ | 7 - 8 |
| ໃບລາຍງານຖານະການເງິນ | 9 – 11 |
| ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ | 12 - 13 |
| ໃບລາຍງານກະແສເງິນສົດ | 14 - 15 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 16 - 50 |

# ທະນາຄານ ໄຊງ່ອນເທືອງຕິ່ນ ລາວ ຈຳກັດ

ຂໍ້ມູນທົ່ວໄປ

**ທະນາຄານ**

ທະນາຄານ ໄຊງ່ອນເທືອງຕິ່ນ ລາວ ຈຳກັດ ("ທະນາຄານ") ເບື້ອງຕົ້ນແມ່ນຖືກສ້າງເປັນສາຂາຂອງທະນາຄານ ຫຸ້ນສ່ວນການຄ້າ ໄຊງ່ອນເທືອງຕິ່ນ ("ຊາຄອມແບັງ"), ເຊິ່ງເປັນທະນາຄານທີ່ດຳເນີນທຸລະກິດໃນປະເທດຫວຽດນາມ. ທະນາຄານດຳເນີນທຸລະກິດພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານເລກທີ 55 ອອກໃຫ້ໂດຍ ທະນາຄານແຫ່ງ ສປປ ລາວ ລົງວັນທີ 9 ທັນວາ 2008.

ໃນວັນທີ 1 ສິງຫາ 2015, ສະຖານະພາບທາງກົດໝາຍຂອງທະນາຄານຖືກປັບປຸງເປັນແບບເປັນ ບໍລິສັດຈຳກັດເອກະຊົນ ທີ່ ຊາຄອມແບັງເປັນເຈົ້າຂອງທັງໝົດຕາມການອະນຸມັດຂອງ ທຫລ ພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານເລກທີ 15 ລົງວັນທີ 9 ມິຖຸນາ 2014.

ນະວັນທີ 31 ທັນວາ 2021, ທຶນຈົດທະບຽນທີ່ໄດ້ຖອກແລ້ວ ແມ່ນ 317,130,539,793 ກີບ (ນະວັນທີ 31 ທັນວາ 2020 ແມ່ນ 317,130,539,793 ກີບ).

ກິດຈະກຳຫຼັກຂອງທະນາຄານແມ່ນ ໃຫ້ບໍລິການທາງດ້ານການທະນາຄານ ແລະ ການບໍລິການທາງການເງິນອື່ນໆໃນ ສປປ ລາວ.

ທະນາຄານຕັ້ງຢູ່ອາຄານເລກທີ 044, ຖະໜົນ ແທ່ງບຸນ, ບ້ານ ຫາຍໂສກ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ, ແລະ ມີ ຫ້າ (5) ສາຂາ ນະວັນທີ 31 ທັນວາ 2021.

**ສະພາບໍລິຫານ**

ສະມາຊິກສະພາບໍລິຫານພາຍໃນປີທີ່ສິ້ນສຸດວັນທີ 31 ທັນວາ 2021 ແລະ ນະວັນທີອອກເອກະສານລາຍງານສະບັບນີ້ປະກອບມີ:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ Nguyen Thuc Vinh | ປະທານ | ແຕ່ງຕັ້ງວັນທີ 16 ສິງຫາ 2019 |
| ທ່ານ Trinh Van Ty | ຮອງປະທານ ແລະ ສະມາຊິກອິດສະຫຼະ | ແຕ່ງຕັ້ງຄືນວັນທີ 16 ສິງຫາ 2019 |
| ທ່ານ Pham Quang Phu | ສະມາຊິກ | ແຕ່ງຕັ້ງຄືນວັນທີ 16 ສິງຫາ 2019 |
| ທ່ານ Phan Thanh Tuan | ສະມາຊິກ | ແຕ່ງຕັ້ງຄືນວັນທີ 16 ສິງຫາ 2019 |
| ທ່ານ ນາງ ອຸໄລພອນ ໂສເງິນ | ສະມາຊິກ | ແຕ່ງຕັ້ງຄືນວັນທີ 16 ສິງຫາ 2019 |

ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດ

ຂໍ້ມູນທົ່ວໄປ (ຕໍ່)

**ຄະນະບໍລິຫານ**

ສະມາຊິກຄະນະບໍລິຫານໃນປີທີ່ສິ້ນສຸດວັນທີ 31 ທັນວາ 2021 ແລະ ນະວັນທີອອກເອກະສານລາຍງານສະບັບນີ້ປະກອບມີ:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງຄືນ* |
|---|---|---|
| ທ່ານ Pham Quang Phu | ຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງຄືນວັນທີ 1 ສິງຫາ 2019 |
| ທ່ານ Phan Thanh Tuan | ຮອງຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງຄືນວັນທີ 1 ສິງຫາ 2019 |
| ທ່ານ ນາງ ອຸໄລພອນ ໂສເງິນ | ຮອງຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງຄືນວັນທີ 1 ສິງຫາ 2019 |
| ທ່ານ Nguyen Hai Duy | ຮອງຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງຄືນວັນທີ 1 ສິງຫາ 2019<br>ລາອອກວັນທີ 01 ມີນາ 2021 |
| ທ່ານ ນາງ ມອນວິໄລ ບໍລິບູນ | ຮອງຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງຄືນວັນທີ 10 ສິງຫາ 2020<br>ລາອອກວັນທີ 05 ຕຸລາ 2021 |

**ຕົວແທນທາງດ້ານກົດໝາຍ**

ຕົວແທນທາງດ້ານກົດໝາຍຂອງທະນາຄານພາຍໃນປີທີ່ສິ້ນສຸດວັນທີ 31 ທັນວາ 2021 ແລະ ນະວັນທີຂອງເອກະສານລາຍງານສະບັບນີ້ ແມ່ນທ່ານ Pham Quang Phu - ຜູ້ອຳນວຍການໃຫຍ່.

**ນັກກວດສອບບັນຊີ**

ນັກກວດສອບບັນຊີຂອງທະນາຄານ ແມ່ນ ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ

# ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານຂອງ ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດ ("ທະນາຄານ") ມີຄວາມຍິນດີໃນການນຳສະເໜີບົດລາຍງານ ແລະ ເອກະສານລາຍງານການເງິນຂອງທະນາຄານ ນະວັນທີ 31 ທັນວາ 2021 ແລະ ສຳລັບປີທີ່ສິ້ນສຸດ.

**ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ກັບເອກະສານລາຍງານການເງິນ**

ຄະນະບໍລິຫານ ແມ່ນມີຄວາມຮັບຜິດຊອບໃນການສ້າງເອກະສານລາຍງານການເງິນຂອງແຕ່ລະປີການບັນຊີ ໃຫ້ຖືກຕ້ອງຕາມຄວາມເປັນຈິງຂອງທະນາຄານ, ຜົນການດຳເນີນງານ ແລະ ກະແສເງິນສົດພາຍໃນປີ. ໃນການສ້າງເອກະສານລາຍງານການເງິນດັ່ງກ່າວ ຄະນະບໍລິຫານຕ້ອງປະຕິບັດດັ່ງນີ້:

- ເລືອກເຟັ້ນນະໂຍບາຍດ້ານການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສະໝ່ຳສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່າບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ທຸກຂໍ້ຂັດແຍ່ງ ຫຼື ຂໍ້ແຕກຕ່າງທີ່ສຳຄັນຕໍ່ການປະຕິບັດຕໍ່ມາດຕະຖານການບັນຊີຕ້ອງຖືກນຳມາເປີດເຜີຍ ແລະ ອະທິບາຍຢູ່ໃນເອກະສານລາຍງານການເງິນ; ແລະ
- ສ້າງເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນແຕ່ທາງທະນາຄານຫາກຕັ້ງຂໍ້ສົມມຸດຕິຖານ ຫຼື ຄາດຄະເນວ່າທະນາຄານບໍ່ສາມາດທີ່ຈະດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານຮັບປະກັນວ່າ ການບັນທຶກບັນຊີໄດ້ຖືກປະຕິບັດຢ່າງຖືກຕ້ອງ ເຊິ່ງໄດ້ເປີດເຜີຍຖານະການເງິນຂອງທະນາຄານຢ່າງເໝາະສົມໃນທຸກເວລາ ແລະ ຮັບປະກັນວ່າການບັນທຶກບັນຊີແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້. ນອກນັ້ນ, ຄະນະບໍລິຫານຍັງຕ້ອງຮັບຜິດຊອບຕໍ່ການຮັກສາຊັບສົມບັດຄົງທີ່ຂອງທະນາຄານ ແລະ ຮັບປະກັນວ່າທະນາຄານມີຂັ້ນຕອນການກວດສອບທີ່ເໝາະສົມເພື່ອປ້ອງກັນການສໍ້ໂກງ ຫຼື ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານໄດ້ຢັ້ງຢືນວ່າ ທະນາຄານໄດ້ປະຕິບັດຕາມເງື່ອນໄຂທີ່ກ່າວມາຂ້າງເທິງໃນການກະກຽມເອກະສານລາຍງານການເງິນທີ່ໄດ້ຄັດຕິດມານີ້.

**ຄຳຖະແຫຼງການຂອງຄະນະບໍລິຫານ**

ຄະນະບໍລິຫານຂໍຮັບຮອງວ່າ, ໃນຄຳເຫັນຂອງຄະນະບໍລິຫານ, ເອກະສານລາຍງານການເງິນໄດ້ຖືກກະກຽມໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີແຫ່ງ ສປປ ລາວ ແລະ ບັນດາລະບຽບການຕ່າງໆທີ່ໄດ້ວາງອອກໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

ໃນນາມ ແລະ ຕາງໜ້າຄະນະບໍລິຫານ:

ທະນາຄານ ແຫ່ງ ສປປ ... ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດ SAIGON THUONG TIN BANK LAO CO.,LTD ນະຄອນ ຫຼວງ ວຽງຈັນ

ທ່ານ Pham Quang Phu
ຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ

13 ພຶດສະພາ 2022

Building a better working world

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

ເລກທີອ້າງອີງ: 61079125/22953263

# ບົດລາຍງານຂອງນັກກວດສອບອິດສະຫຼະ

**ຮຽນ: ເຈົ້າຂອງ ທະນາຄານ ໄຊງ່ອນເທືອງຕື່ນ ລາວ ຈຳກັດ**

***ຄຳເຫັນ***

ພວກຂ້າພະເຈົ້າ ໄດ້ດຳເນີນການກວດສອບ ເອກະສານລາຍງານການເງິນຂອງທະນາຄານ ໄຊງ່ອນເທືອງຕື່ນ ລາວ ຈຳກັດ ("ທະນາຄານ"), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນນະວັນທີ 31 ທັນວາ 2021, ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ທີ່ປະກອບດ້ວຍບົດສະຫຼຸບຂອງບັນດານະໂຍບາຍທາງບັນຊີທີ່ສຳຄັນ.

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນຂອງທະນາຄານໄດ້ຖືກກະກຽມໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີແຫ່ງ ສປປ ລາວ ແລະ ບັນດາລະບຽບການຕ່າງໆທີ່ໄດ້ວາງອອກໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

***ພື້ນຖານການອອກຄຳເຫັນ***

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ (ISAs). ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າທີ່ກຳນົດໄວ້ພາຍໃຕ້ບັນດາມາດຕະຖານເຫຼົ່ານັ້ນ ໄດ້ຖືກອະທິບາຍເພີ່ມເຕີມໃນວັກ *ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນ* ຂອງບົດລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າແມ່ນມີຄວາມເປັນເອກະລາດຈາກທະນາຄານ ໂດຍສອດຄ່ອງກັບ ກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ ແລະ ບັນດາຂໍ້ກຳນົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ, ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆໂດຍສອດຄ່ອງກັບບັນດາຂໍ້ກຳນົດ ແລະ ກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

***ບັນຫາທີ່ຄວນເອົາໃຈໃສ່***

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ *ບົດອະທິບາຍເລກທີ 2* ຂອງເອກະສານລາຍງານການເງິນ ທີ່ໄດ້ອະທິບາຍພື້ນຖານຂອງການບັນຊີທີ່ໄດ້ຖືກນຳໃຊ້ໂດຍທະນາຄານ. ບັນດານະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີຖານະທາງການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດຂອງທະນາຄານ ເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ.

ພວກຂ້າພະເຈົ້າຍັງສະເໜີໃຫ້ເອົາໃຈໃສ່ຕໍ່ *ບົດອະທິບາຍເລກທີ 25 - ຄຳໝັ້ນສັນຍາ ແລະ ການດຳເນີນຄະດີ* ຕໍ່ບົດລາຍງານການເງິນ, ທີ່ອະທິບາຍເຖິງຄວາມບໍ່ແນ່ນອນທີ່ກ່ຽວພັນກັບຜົນຂອງການດຳເນີນຄະດີທີ່ກຳລັງດຳເນີນຢູ່ໃນອະນາຄົດ.

ຄຳເຫັນຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ຮັບການແກ້ໄຂຕໍ່ກັບບັນຫາດັ່ງກ່າວ.



A member firm of Ernst & Young Global Limited

***ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ກັບເອກະສານລາຍງານການເງິນ***

ຄະນະບໍລິຫານການຂອງທະນາຄານແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບ ກົດໝາຍວ່າດ້ວຍການການບັນຊີແຫ່ງ ສປປ ລາວ ແລະ ລະບຽບການທີ່ອອກໂດຍ ທະນາຄານແຫ່ງ ສປປ ລາວ ໃນການກະກຽມ ແລະ ການນໍາສະເໜີເອກະສານລາຍງານການເງິນ, ການຮັບຜິດຊອບການຄຸ້ມຄອງພາຍໃນທີ່ຄະນະບໍລິຫານການເຫັນວ່າ ມີຄວາມຈໍາເປັນໃນການກະກຽມເອກະສານລາຍງານການເງິນ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະອໍານວຍການ ມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງບໍລິສັດທາງດ້ານຄວາມສືບເນື່ອງໃນການດໍາເນີນທຸລະກິດ, ການເປີດເຜີຍ, ເໝາະສົມ ແລະ ນໍາໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດໍາເນີນທຸລະກິດ ຈົນກວ່າທີ່ທາງຄະນະບໍລິຫານການຂອງທະນາຄານຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດໍາເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະບໍລິຫານການຂອງທະນາຄານ ມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

***ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນ***

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອຮັບເອົາ ການຮັບປະກັນທີ່ສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ. ແລະ ເພື່ອການອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄໍາເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດໍາເນີນໂດຍສອດຄ່ອງກັບ ມາດຕະຖານດ້ານການກວດສອບສາກົນ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນໄດ້ຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າ ສໍາຄັນ ຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນໍາໃຊ້ເອກະສານລາຍງານການເງິນ.

ໃນການກວດສອບໂດຍສອດຄ່ອງກັບ ມາດຕະຖານດ້ານການກວດສອບສາກົນ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບ ໃນຕະຫຼອດການດໍາເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກໍານົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດໍາເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄໍາເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຂອງການບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຜົນທີ່ມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.
- ທໍາຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄໍາເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງທະນາຄານ.
- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນໍາໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດໍາເນີນທຸລະກິດຂອງຄະນະບໍລິຫານການ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສໍາຄັນທີ່ອາດເກີດຂຶ້ນ ຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໄສທີ່ສໍາຄັນກ່ຽວກັບຄວາມອາດສາມາດຂອງທະນາຄານໃນການສືບເນື່ອງໃນການດໍາເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າ ສະຫຼຸບໄດ້ວ່າມີຄວາມບໍ່ແນ່ນອນທີ່ສໍາຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານ

ຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອໃຫ້ສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄໍາເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອານະຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ທະນາຄານຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດໍາເນີນທຸລະກິດ.

- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍທາງບັນຊີທີ່ນໍາໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນໍາໃຊ້ໂດຍຄະນະບໍລິຫານການ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງກ່ຽວກັບບັນດາບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ພົບເຫັນທາງການກວດສອບທີ່ສໍາຄັນ, ລວມເຖິງບັນດາຂໍ້ບົກຜ່ອງທີ່ສໍາຄັນຕ່າງໆໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າພົບເຫັນໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

**ບໍລິສັດ ເອີນແອນຢັງ ລາວ ຈໍາກັດ**

Ernst & Young Lao Ltd

ນະຄອນຫຼວງວຽງຈັນ, ສປປ ລາວ
13 ພຶດສະພາ 2022

## ທະນາຄານ ໄຊງ່ອນເທືອງຕິ່ນ ລາວ ຈຳກັດ

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2021

| *ລຳດັບ* | *ລາຍການ* | *ບົດອະທິບາຍ ເລກທີ* | *2021 ລ້ານກີບ* | *2020 ລ້ານກີບ* |
|---|---|---|---|---|
| **ກ.** | **ລາຍຮັບ ແລະ ລາຍຈ່າຍໃນການດຳເນີນງານ** | | | |
| **1** | **ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **3** | **109,523** | **102,768** |
| **2** | **ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **3** | **(75,605)** | **(54,620)** |
| **I.** | **ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | | **33,918** | **48,148** |
| **3** | **ລາຍຮັບຄ່າທຳນຽມ ແລະ ການບໍລິການ** | **4** | **17,227** | **8,767** |
| **4** | **ລາຍຈ່າຍຄ່າທຳນຽມ ແລະ ການບໍລິການ** | **4** | **(1,215)** | **(883)** |
| **5** | **ກຳໄລສຸດທິຈາກເງິນຕາຕ່າງປະເທດ** | **5** | **15,724** | **3,706** |
| **II.** | **ລາຍຮັບສຸດທິຈາກການດຳເນີນງານ** | | **65,654** | **59,738** |
| **ຂ.** | **ລາຍຮັບ ແລະ ລາຍຈ່າຍອື່ນໆ** | | | |
| **6** | **ລາຍຮັບຈາກການດຳເນີນງານອື່ນໆ** | **6** | **4,468** | **3,859** |
| **7** | **ລາຍຈ່າຍບໍລິຫານ** | | **(39,924)** | **(41,536)** |
| 7.1 | ເງິນເດືອນ ແລະ ລາຍຈ່າຍອື່ນໆທີ່ກ່ຽວກັບພະນັກງານ | 7 | (27,634) | (28,621) |
| 7.2 | ລາຍຈ່າຍບໍລິຫານອື່ນໆ | 8 | (12,290) | (12,915) |

# ທະນາຄານ ໄຊງ່ອນເທືອງຕິ່ນ ລາວ ຈຳກັດ

ໃບລາຍງານຜົນການດຳເນີນງານ (ຕໍ່)
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2021

| *ລຳດັບ* | *ລາຍການ* | *ບົດອະທິບາຍ ເລກທີ* | *2021 ລ້ານກີບ* | *2020 ລ້ານກີບ* |
|---|---|---|---|---|
| 8 | **ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ** | | **(10,663)** | **(10,262)** |
| 9 | **ລາຍຈ່າຍການດຳເນີນງານອື່ນໆ** | **9** | **(1,012)** | **(2,169)** |
| 10 | **ລາຍຈ່າຍເງິນແຮສຸດທິສຳລັບການສູນເສຍສິນເຊື່ອ** | **13.2** | **(9,180)** | **(1,641)** |
| III. | **ລວມກຳໄລກ່ອນອາກອນ** | | **9,343** | **7,989** |
| 11 | **ອາກອນກຳໄລພາຍໃນປີ** | | **(2,183)** | **(1,598)** |
| 11.1 | ລາຍຈ່າຍອາກອນກຳໄລພາຍໃນປີ | 20.2 | (2,183) | (1,598) |
| IV. | **ກຳໄລຫຼັງອາກອນ** | | **7,160** | **6,391** |

ກະກຽມໂດຍ: ກວດກາໂດຍ: ອະນຸມັດໂດຍ:

ທ່ານ Hoang Thanh Lam
ຫົວໜ້າບັນຊີ-ບໍລິຫານ

ທ່ານ ນາງ ອຸໄລພອນ ໂສເງີນ
ຮອງຜູ້ອຳນວຍການໃຫຍ່

ທ່ານ Pham Quang Phu
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
13 ພຶດສະພາ 2022

## ທະນາຄານ ໄຊງ່ອນເທືອງຕື່ນ ລາວ ຈຳກັດ

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2021

| ລຳດັບ | ຊັບສິນ | ບົດອະທິບາຍ ເລກທີ | 31/12/2021 ລ້ານກີບ | 31/12/2020 ລ້ານກີບ |
|---|---|---|---|---|
| I | **ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ")** | **10** | **492,334** | **172,585** |
| 1 | ເງິນສົດໃນຄັງ | | 28,824 | 27,450 |
| 2 | ເງິນຝາກຢູ່ ທຫລ | | 463,510 | 145,135 |
| II | **ໜີ້ຕ້ອງຮັບຈາກທະນາຄານ ແລະ ສະຖາບັນການເງິນອື່ນ** | **11** | **632,096** | **500,183** |
| 1 | ເງິນຝາກກະແສລາຍວັນ | 11.1 | 566,401 | 263,635 |
| 2 | ເງິນຝາກມີກຳນົດ | 11.2 | 65,695 | 236,548 |
| III | **ການລົງທຶນໃນຫຼັກຊັບ** | **12** | **9,161** | **-** |
| IV | **ເງິນກູ້ໃຫ້ແກ່ລູກຄ້າ, ຫຼັງຫັກເງິນແຮສະເພາະສຳລັບໜີ້ເສຍ** | **13** | **979,303** | **1,013,918** |
| V | **ຊັບສິນບັດຄົງທີ່** | | **87,861** | **90,361** |
| 1 | ຊັບສິນພວມຊື້ພວມກໍ່ສ້າງ | 14.1 | 57 | |
| 2 | ຊັບສິນບັດຄົງທີ່ບໍ່ມີຕົວຕົນ | 14.2 | 15,855 | 15,855 |
| 3 | ຊັບສິນບັດຄົງທີ່ມີຕົວຕົນ | 14.3 | 65,298 | 74,506 |
| 4 | ສິດໃນການນຳໃຊ້ຊັບສິນ | | 6,651 | - |
| VI | **ຊັບສິນອື່ນໆ** | | **26,764** | **30,374** |
| 1 | ໜີ້ຕ້ອງຮັບດອກເບ້ຍຄ້າງຮັບ | 15 | 14,478 | 18,125 |
| 2 | ອາກອນຄ້າງຮັບ | 20.1 | 130 | - |
| 3 | ຊັບສິນອື່ນໆ | 16 | 12,156 | 12,249 |
| | **ລວມຊັບສິນ** | | **2,227,519** | **1,807,421** |

## ທະນາຄານ ໄຊງ່ອນເທືອງຕິ່ນ ລາວ ຈຳກັດ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2021

| *ລຳດັບ* | *ໜີ້ສິນ ແລະ ທຶນ* | *ບົດອະທິບາຍ ເລກທີ* | *31/12/2021 ລ້ານກີບ* | *31/12/2020 ລ້ານກີບ* |
|---|---|---|---|---|
| I | **ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນ** | **17** | **761,843** | **563,673** |
| 1 | ເງິນຝາກກະແສລາຍວັນ | | 231,119 | 110,659 |
| 2 | ເງິນຝາກມີກຳນົດ | | 530,724 | 453,014 |
| II | **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | **18** | **1,066,354** | **867,306** |
| 1 | ເງິນຝາກກະແສລາຍວັນ | | 96,632 | 64,844 |
| 2 | ເງິນຝາກປະຢັດ ແລະ ເງິນຝາກມັດຈຳ | | 61,861 | 77,018 |
| 3 | ເງິນຝາກມີກຳນົດ | | 904,986 | 725,444 |
| 4 | ໜີ້ຕ້ອງສົ່ງໃຫ້ລູກຄ້າອື່ນໆ | | 2,875 | - |
| III | **ໜີ້ສິນອື່ນໆ** | | **46,048** | **30,161** |
| 1 | ດອກເບ້ຍຄ້າງຈ່າຍ | 19 | 33,504 | 25,113 |
| 2 | ໜີ້ສິນຕາມສັນຍາເຊົ່າ | 14.3 | 7,297 | - |
| 3 | ອາກອນຄ້າງຈ່າຍ | 20.1 | - | 472 |
| 4 | ໜີ້ສິນອື່ນໆ | 21 | 5,247 | 4,576 |
| | **ລວມໜີ້ສິນ** | | **1,874,245** | **1,461,140** |
| IV | **ທຶນ ແລະ ເງິນແຮ** | | | |
| 1 | ທຶນຈົດທະບຽນທີ່ຖອກແລ້ວ | | 317,131 | 317,131 |
| 2 | ຄັງສະສົມຕາມລະບຽບການ | | 10,220 | 9,504 |
| 3 | ເງິນແຮທົ່ວໄປສຳລັບເງິນກູ້ປົກກະຕິ | 13.2 | 4,695 | 4,862 |
| 4 | ເງິນແຮທົ່ວໄປຂອງທະນາຄານ | | 4,083 | 4,083 |
| 5 | ກຳໄລສະສົມ | | 17,145 | 10,701 |
| | **ລວມທຶນ** | | **353,274** | **346,281** |
| | **ລວມຍອດໜີ້ສິນ ແລະ ທຶນ** | | **2,227,519** | **1,807,421** |

ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2021

| ລຳດັບ | ລາຍການນອກໃບລາຍງານຖານະທາງການເງິນ | ບົດ ອະທິບາຍ ເລກທີ | ຍອດເຫຼືອທ້າຍປີ ລ້ານກີບ | ຍອດຕົ້ນປີ ລ້ານກີບ |
|---|---|---|---|---|
| **I** | **ຄຳໝັ້ນສັນຍາ** | | **70,857** | **76,998** |
| 1 | ຄຳໝັ້ນສັນຍາການຄ້ຳປະກັນທີ່ໄດ້ໃຫ້ກັບລູກຄ້າ | | 70,857 | 76,998 |
| | **ລວມຍອດຄຳໝັ້ນສັນຍາທີ່ໄດ້ໃຫ້** | | **70,857** | **76,998** |
| **II** | **ຫຼັກຊັບຄ້ຳປະກັນ ແລະ ຈຳນອງ** | | | |
| ກ | **ຫຼັກຊັບຄ້ຳປະກັນ ແລະ ຈຳນອງສຳລັບເງິນກູ້** | | **3,117,771** | **2,942,286** |
| 1 | ຫຼັກຊັບຄ້ຳປະກັນ ແລະ ຈຳນອງສຳລັບເງິນກູ້ໃຫ້ລູກຄ້າ | | 3,117,771 | 2,942,286 |
| ຂ | **ຫຼັກຊັບຄ້ຳປະກັນ ແລະ ໜັງສືຄ້ຳປະກັນ** | | **64,144** | **72,388** |
| 1 | ຫຼັກຊັບຄ້ຳປະກັນ ແລະ ໜັງສືຄ້ຳປະກັນສຳລັບລູກຄ້າ | | 64,144 | 72,388 |
| | **ລວມຫຼັກຊັບຄ້ຳປະກັນ ແລະ ຈຳນອງ** | | **3,181,915** | **3,014,674** |

ກະກຽມໂດຍ: | ກວດກາໂດຍ: | ອະນຸມັດໂດຍ:

ທະນາຄານ ແຫ່ງ ສປປ ລາວ ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດ SAIGON THUONG TIN BANK LAO CO.,LTD ນະຄອນ ຫຼວງ ວຽງຈັນ

ທ່ານ Hoang Thanh Lam
ຫົວໜ້າບັນ-ຊີບໍລິຫານ

ທ່ານ ນາງ ອຸໄລພອນ ໂສເງິນ
ຮອງຜູ້ອຳນວຍການໃຫຍ່

ທ່ານ Pham Quang Phu
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
13 ພຶດສະພາ 2022

## ທະນາຄານ ໄຊງ່ອນເທືອງຕື່ນ ລາວ ຈຳກັດ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2021

| | *ທຶນຈົດທະບຽນທີ່ຖອກແລ້ວ*<br>*ລ້ານກີບ* | *ຄັງສະສົມຕາມລະບຽບການ*<br>*ລ້ານກີບ* | ເງິນແຮທົ່ວໄປສຳລັບເງິນກູ້ປົກກະຕິ<br>*ລ້ານກີບ* | *ເງິນແຮທົ່ວໄປຂອງທະນາຄານ*<br>*ລ້ານກີບ* | *ກຳໄລສະສົມ*<br>*ລ້ານກີບ* | *ລວມ*<br>*ລ້ານກີບ* |
|---|---|---|---|---|---|---|
| **ຍອດເຫຼືອນະວັນທີ 1 ມັງກອນ 2020** | **317,131** | **8,865** | **4,231** | **4,083** | **25,390** | **359,700** |
| ກຳໄລສຸດທິໃນປີ | - | - | - | - | 6,391 | 6,391 |
| ຄັງສະສົມຕາມລະບຽບການພາຍໃນປີ | - | 639 | - | - | (639) | - |
| ເງິນແຮທົ່ວໄປສຸດທິພາຍໃນປີ | - | - | 603 | - | - | 603 |
| ໂອນໃຫ້ສຳນັກງານໃຫຍ່ | - | - | - | - | (18,397) | (18,397) |
| ລາຍຈ່າຍອາກອນ 10% ຈາກການໂອນກຳໄລສະສົມໃຫ້ສຳນັກງານໃຫຍ່ | - | - | - | - | (2,044) | (2,044) |
| ສ່ວນຜິດດ່ຽງຈາກອັດຕາແລກປ່ຽນ | - | - | 28 | - | - | 28 |
| **ຍອດເຫຼືອນະວັນທີ 1 ມັງກອນ 2021** | **317,131** | **9,504** | **4,862** | **4,083** | **10,701** | **346,281** |
| ກຳໄລສຸດທິໃນປີ | - | - | - | - | 7,160 | 7,160 |
| ຄັງສະສົມຕາມລະບຽບການພາຍໃນປີ | - | 716 | - | | (716) | - |
| ເງິນແຮທົ່ວໄປສຸດທິພາຍໃນປີ | - | - | (247) | - | - | (247) |
| ສ່ວນຜິດດ່ຽງຈາກອັດຕາແລກປ່ຽນ | - | - | 80 | - | - | 80 |
| **ຍອດເຫຼືອນະ 31 ທັນວາ 2021** | **317,131** | **10,220** | **4,695** | **4,083** | **17,145** | **353,274** |

# ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ (ຕໍ່)
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2021

| ກະກຽມໂດຍ: | ກວດກາໂດຍ: | ອະນຸມັດໂດຍ: |
|---|---|---|
| ທ່ານ Hoang Thanh Lam | ທ່ານ ນາງ ອຸໄລພອນ ໂສເງິນ | ທ່ານ Pham Quang Phu |
| ຫົວໜ້າບັນຊີ-ບໍລິຫານ | ຮອງຜູ້ອຳນວຍການໃຫຍ່ | ຜູ້ອຳນວຍການໃຫຍ່ |

ນະຄອນຫຼວງວຽງຈັນ, ສປປ ລາວ
13 ພຶດສະພາ 2022

## ທະນາຄານ ໄຊງ່ອນເທືອງຕິ່ນ ລາວ ຈຳກັດ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2021

| *ລາຍການ* | *ບົດອະທິບາຍ ເລກທີ* | *ປີປັດຈຸບັນ ລ້ານກີບ* | *ປີຜ່ານມາ ລ້ານກີບ* |
|---|---|---|---|
| **ກິດຈະກຳການດຳເນີນງານ** | | | |
| **ກຳໄລສຸດທິກ່ອນອາກອນ:** | | **9,343** | **7,989** |
| *ດັດແກ້ສຳລັບ:* | | | |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ | | 10,663 | 10,262 |
| ລາຍຈ່າຍເງິນແຮສຳລັບໜີ້ເສຍ | 13.2 | 8,237 | 3,075 |
| ລາຍຮັບດອກເບ້ຍ | | (109,523) | (102,768) |
| ລາຍຈ່າຍດອກເບ້ຍ | | 75,605 | 54,620 |
| **ກຳໄລຈາກການດຳເນີນງານກ່ອນການປ່ຽນແປງຊັບສິນ ແລະ ໜີ້ສິນໃນການດຳເນີນງານ** | | **(5,675)** | **(26,822)** |
| ຫຼຸດລົງ/(ເພີ່ມຂຶ້ນ)ໃນຊັບສິນຈາກການດຳເນີນງານ | | | |
| ໜີ້ຕ້ອງຮັບຈາກສະຖາບັນສິນເຊື່ອ | | 170,853 | (134,644) |
| ການລົງທຶນໃນຫຼັກຊັບ | | (9,161) | - |
| ເງິນກູ້ໃຫ້ແກ່ລູກຄ້າ | | 26,129 | (152,556) |
| ຊັບສິນອື່ນໆ | | (9,350) | 3,670 |
| (ຫຼຸດລົງ)/ເພີ່ມຂຶ້ນຂອງໜີ້ສິນຈາກການດຳເນີນງານ | | | |
| ໜີ້ຕ້ອງສົ່ງລູກຄ້າ | | 199,049 | 345,915 |
| ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນ | | 198,169 | (41,121) |
| ໜີ້ສິນອື່ນໆ | | 8,509 | (29,895) |
| ດອກເບ້ຍທີ່ໄດ້ຮັບ | | 113,169 | 95,957 |
| ດອກເບ້ຍທີ່ໄດ້ຊຳລະ | | (67,214) | (44,315) |
| ອາກອນທຸລະກິດຊຳລະພາຍໃນປີ | 20.2 | (3,194) | (1,772) |
| **ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ** | | **621,284** | **14,417** |
| **ກິດຈະກຳດ້ານການລົງທຶນ** | | | |
| ຊື້ຊັບສິນບັດຄົງທີ່ | 14.2 | (396) | (1,770) |
| ການສະສາງຊັບສິນບັດຄົງທີ່ | 14.2 | 381 | - |

# ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດ

ໃບລາຍງານກະແສເງິນສົດ (ຕໍ່)
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2021

| *ລາຍການ* | *ບົດອະທິບາຍ ເລກທີ* | *ປີປັດຈຸບັນ ລ້ານກີບ* | *ປີຜ່ານມາ ລ້ານກີບ* |
|---|---|---|---|
| **ກະແສເງິນສົດສຸດທິທີ່ໃຊ້ເຂົ້າໃນກິດຈະກຳການລົງທຶນ** | | **(15)** | **(1,770)** |
| ໂອນກຳໄລສະສົມໃຫ້ສຳນັກງານໃຫຍ່ | | - | (20,441) |
| **ກະແສເງິນສົດສຸດທິໃຊ້ໃນກິດຈະກຳທາງດ້ານການເງິນ** | | **-** | **(20,441)** |
| **ການປ່ຽນແປງສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດພາຍໃນປີ** | | **621,269** | **(6,439)** |
| **ສ່ວນຕ່າງທາງດ້ານອັດຕາແລກປ່ຽນທາງດ້ານເງິນສົດສຸດທິ** | | **1,246** | **28** |
| **ເງິນສົດ ແລະ ທຽບເທົ່າເງິນສົດຕົ້ນປີ** | | **436,215** | **442,626** |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ** | **22** | **1,058,730** | **436,215** |

ກະກຽມໂດຍ: | ກວດກາໂດຍ: | ອະນຸມັດໂດຍ:

ທ່ານ Hoang Thanh Lam
ຫົວໜ້າບັນ-ຊີບໍລິຫານ

ທ່ານ ນາງ ອຸໄລພອນ ໂສເງິນ
ຮອງຜູ້ອຳນວຍການໃຫຍ່

ທ່ານ Pham Quang Phu
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

13 ພຶດສະພາ 2022

## 1. ຂໍ້ມູນກ່ຽວກັບທະນາຄານ

### *ການກໍ່ຕັ້ງ ແລະ ການດຳເນີນທຸລະກິດ*

ທະນາຄານ ໄຊງ່ອນເທືອງຕິ່ນ ລາວ ຈຳກັດ ("ທະນາຄານ") ເບື້ອງຕົ້ນແມ່ນສ້າງເປັນສາຂາຂອງທະນາຄານ ຫຸ້ນສ່ວນການຄ້າ ໄຊງ່ອນເທືອງຕິ່ນ ("ຊາຄອມແບັງ") ເຊິ່ງເປັນທະນາຄານທີ່ດຳເນີນທຸລະກິດໃນປະເທດຫວຽດນາມ. ທະນາຄານດຳເນີນທຸລະກິດພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານເລກທີ 55 ອອກໃຫ້ໂດຍ ທະນາຄານແຫ່ງ ສປປ ລາວ ລົງວັນທີ 9 ທັນວາ 2008.

ໃນວັນທີ 1 ສິງຫາ 2015, ສະຖານະພາບທາງກົດໝາຍຂອງທະນາຄານຖືກປ່ຽນຮູບແບບເປັນ ບໍລິສັດຈຳກັດເອກະຊົນ ທີ່ ຊາຄອມແບັງເປັນເຈົ້າຂອງທັງໝົດຕາມການອະນຸມັດຂອງ ທຫລ ພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານເລກທີ 15 ລົງວັນທີ 9 ມິຖຸນາ 2014.

ກິດຈະກຳຫຼັກຂອງທະນາຄານແມ່ນ ໃຫ້ບໍລິການທາງດ້ານການທະນາຄານ ແລະ ການບໍລິການທາງການເງິນອື່ນໆໃນ ສປປ ລາວ.

### *ທຶນຈົດທະບຽນທີ່ໄດ້ຖອກແລ້ວ*

ນະວັນທີ 31 ທັນວາ 2021, ທຶນຈົດທະບຽນທີ່ໄດ້ຖອກແລ້ວ ນະວັນທີ 31 ທັນວາ 2021 ແມ່ນ 317,130,539,793 ກີບ (ນະວັນທີ 31 ທັນວາ 2020 ແມ່ນ 317,130,539,793 ກີບ).

### *ທີ່ຕັ້ງ*

ທະນາຄານຕັ້ງຢູ່ ຖະໜົນແຫ່ງບຸນ ເລກທີ 044, ບ້ານຫາຍໂສກ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ ແລະ ມີສາຂາທັງໝົດ 5 ສາຂາ ນະວັນທີ 31 ທັນວາ 2021.

### *ພະນັກງານ*

ພະນັກງານ ທັງໝົດຂອງທະນາຄານ ນະວັນທີ 31 ທັນວາ 2021 ແມ່ນ 202 ຄົນ (31 ທັນວາ 2020: 204 ຄົນ)

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

### *2.1. ບົດຖະແຫຼງການໃນການປະຕິບັດ*

ຄະນະບໍລິຫານການຢັ້ງຢືນວ່າ ເອກະສານລາຍງານການເງິນແມ່ນຖືກສ້າງຂຶ້ນ ໂດຍສອດຄ່ອງກັບກົດໝາຍການບັນຊີແຫ່ງ ສປປ ລາວ ແລະ ລະບຽບການທີ່ອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການສ້າງ ແລະ ນຳສະເໜີເອກະສານລາຍງານການເງິນ.

## 2. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

### *2.2 ພື້ນຖານໃນການກະກຽມ*

ທະນາຄານບັນທຶກບັນຊີເປັນເງິນກີບ ແລະ ໄດ້ສ້າງເອກະສານລາຍງານການເງິນເປັນຫົວໜ່ວຍລ້ານກີບ ("ລ້ານກີບ") ໂດຍອີງຕາມດຳລັດເລກທີ 02/ນຍ ຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ລົງວັນທີ 22 ມີນາ 2000 ແລະ ກົດໝາຍການບັນຊີຂອງ ສປປ ລາວ ແລະ ລະບຽບການທີ່ກຳນົດໃຊ້ໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການສ້າງ ແລະ ການນຳສະເໜີເອກະສານລາຍງານການເງິນ.

ເອກະສານລາຍງານການເງິນສະບັບນີ້ໄດ້ຖືກສ້າງໂດຍນຳໃຊ້ ຫຼັກການ, ຂັ້ນຕອນ ແລະ ການລາຍງານທາງການບັນຊີທີ່ຖືກຍອມຮັບໃນ ສປປ ລາວ. ດັ່ງນັ້ນ ໃບລາຍງານຜົນການດຳເນີນງານ, ໃບລາຍງານຖານະການເງິນ, ໃບລາຍງານສ່ວນປ່ຽນແປງທຶນຕົນເອງ , ໃບລາຍງານກະແສເງິນສົດ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານ ແມ່ນບໍ່ໄດ້ສ້າງຂຶ້ນສຳລັບບຸກຄົນທີ່ບໍ່ໄດ້ຮັບຮູ້ກ່ຽວກັບຫຼັກການບັນຊີ, ຂັ້ນຕອນ ແລະ ການປະຕິບັດການບັນຊີຂອງ ສປປ ລາວ ແລະ ບໍ່ໄດ້ມີຈຸດປະສົງນຳສະເໜີຖານະການເງິນ, ຜົນຂອງການດຳເນີນງານ ແລະ ກະແສເງິນສົດບົນພື້ນຖານຫຼັກການບັນຊີ ແລະ ການປະຕິບັດການບັນຊີທີ່ຖືກຍອມຮັບໂດຍທົ່ວໄປໃນປະເທດອື່ນນອກເໜືອຈາກ ສປປ ລາວ.

ປີການບັນຊີຂອງທະນາຄານແມ່ນເລີ່ມແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດ ວັນທີ 31 ທັນວາ.

### ***2.3 ການປ່ຽນແປງນະໂຍບາຍການບັນຊີ ແລະ ການເປີດເຜີຍ***

ນະໂຍບາຍການບັນຊີທີ່ຮັບຮອງໂດຍທະນາຄານສຳລັບການກະກຽມບົດລາຍງານການເງິນເຫຼົ່ານີ້ແມ່ນສອດຄ່ອງກັບນະໂຍບາຍທີ່ນຳໃຊ້ໃນການກະກຽມເອກະສານລາຍງານການເງິນຂອງທະນາຄານ ສຳລັບປີທີ່ສິ້ນສຸດ ນະວັນທີ 31 ທັນວາ 2020. ຍົກເວັ້ນການປ່ຽນແປງນະໂຍບາຍການບັນຊີ ແລະ ການບັນທຶກບັນຊີທີ່ກ່ຽວຂ້ອງດັ່ງລຸ່ມນີ້.

#### *2.3.1 ອາກອນກຳໄລ*

ໃນປີ 2021, ອີງຕາມແຈ້ງການເລກທີ 213/ທຫລ, ລົງວັນທີ 24 ມີນາ 2021 ກ່ຽວກັບຄຳແນະນຳກ່ຽວກັບ IAS12 - ອາກອນລາຍໄດ້ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນຂອງທະນາຄານທຸລະກິດ, ທະນາຄານໄດ້ນຳໃຊ້ນະໂຍບາຍການບັນຊີໃຫມ່ຂອງອາກອນເຍື້ອນຊຳລະໃນການກະກຽມ ແລະ ການນຳສະເຫນີລາຍງານການເງິນ. ອ້າງອີງເຖິງບົດອະທິບາຍເລກທີ 2.14 ສຳລັບນະໂຍບາຍການບັນຊີທີ່ນຳໃຊ້ຕັ້ງແຕ່ວັນທີ 1 ມັງກອນ 2021.

ອາກອນເຍື້ອນຊຳລະແມ່ນຖືກຄິດໄລ່ຈາກສ່ວນຕ່າງຊົ່ວຄາວນະມື້ທີ່ອອກບົດລາຍງານລະຫວ່າງຖານອາກອນຂອງຊັບສິນ ແລະ ໜີ້ສິນ ແລະ ມູນຄ່າຕາມບັນຊີເພື່ອຈຸດປະສົງໃນການລາຍງານການເງິນ. ຢ່າງໃດກໍ່ຕາມ, ອີງຕາມການປະເມີນໃນວັນທີ 1 ມັງກອນ 2021 ແລະ 31 ທັນວາ 2021 ບໍ່ມີສ່ວນຕ່າງຊົ່ວຄາວລະຫວ່າງຊັບສິນ ແລະ ໜີ້ສິນທາງອາກອນ ແລະ ມູນຄ່າຕາມບັນຊີ ເພື່ອຈຸດປະສົງການລາຍງານການເງິນເພື່ອຮັບຮູ້ຊັບສິນ ຫຼື ໜີ້ສິນທາງອາກອນ.

## 2 **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

### *2.3 ການປ່ຽນແປງນະໂຍບາຍການບັນຊີ ແລະ ການເປີດເຜີຍ* (ຕໍ່)

#### *2.3.2 ຄ່າເຊົ່າ*

ໃນປີ 2021, ນະໂຍບາຍຂອງບັນຊີທະນາຄານກ່ຽວກັບສັນຍາເຊົ່າໄດ້ມີການປ່ຽນແປງຕາມການແຈ້ງການເລກທີ 1433/ທຫລ ໃນວັນທີ 24 ຕຸລາ 2019 ທີ່ໄດ້ຮຽກຮ້ອງໃຫ້ທະນາຄານທຸລະກິດໄດ້ນຳໃຊ້ມາດຕະຖານສາກົນດ້ານການລາຍງານການເງິນ IFRS 16 ໃນການກະກຽມ ແລະ ການນຳສະເໜີລາຍງານການເງິນ.

ມາດຕະຖານສາກົນດ້ານການລາຍງານການເງິນ IFRS 16 ໄດ້ມີການກຳນົດຫຼັກການຮັບຮູ້, ການວັດແທກມູນຄ່າ, ການນຳສະເໜີ ແລະ ການເປີດເຜີຍຂອງການເຊົ່າ ແລະ ການຮຽກຮ້ອງໃຫ້ການເຊົ່າຖືກບັນທຶກເຂົ້າໃນຮູບແບບການຕິດຕາມເຂົ້າໃນໃບສະຫຼຸບຊັບສິນບັດ.

ທະນາຄານໄດ້ຮັບຮອງເອົາມາດຕະຖານສາກົນດ້ານການລາຍງານການເງິນ IFRS 16 ໂດຍນຳໃຊ້ວິທີການຍ້ອນຄືນທີ່ໄດ້ຮັບການປັບປຸງໃນການຮັບຮອງເອົາວັນທີ 1 ມັງກອນ 2021. ພາຍໃຕ້ວິທີການນີ້, ມາດຕະຖານແມ່ນໄດ້ຖືກນຳໃຊ້ຄືນກັບຜົນກະທົບສະສົມຂອງການນຳໃຊ້ມາດຕະຖານທີ່ຮັບຮູ້ໃນເບື້ອງຕົ້ນໃນວັນທີ່ນຳໃຊ້ໃນເບື້ອງຕົ້ນ. ທະນາຄານໄດ້ເລືອກໃຊ້ການ ປ່ຽນແປງທີ່ໃຊ້ການໄດ້ທີ່ເໝາະສົມເພື່ອບໍ່ປະເມີນຄືນໃໝ່ວ່າສັນຍາຈະເປັນ ຫຼືມີການເຊົ່າໃນວັນທີ 1 ມັງກອນ 2021. ເຖິງຢ່າງໃດກໍຕາມ, ທະນາຄານໄດ້ນຳໃຊ້ມາດຕະຖານສະເພາະກັບສັນຍາທີ່ໄດ້ລະບຸໄວ້ກ່ອນໜ້ານີ້ວ່າເປັນການໃຫ້ເຊົ່າໃນວັນທີ່ມີໃບສະໝັກເບື້ອງຕົ້ນເທົ່ານັ້ນ.

ກ່ອນການຮັບຮອງເອົາ IFRS 16, ທະນາຄານໄດ້ຈັດປະເພດການເຊົ່າແຕ່ລະລາຍການ (ເປັນຜູ້ເຊົ່າ) ໃນວັນທີ່ເລີ່ມຕົ້ນເປັນການເຊົ່າທາງດ້ານການເງິນ ຫຼື ການເຊົ່າທາງການດຳເນີນງານ.

ເມື່ອຮັບເອົາມາດຕະຖານສາກົນດ້ານການລາຍງານການເງິນ IFRS 16, ທະນາຄານໄດ້ນຳໃຊ້ວິທີການຮັບຮູ້ ແລະ ການວັດແທກມູນຄ່າແບບດຽວສຳລັບການໃຫ້ເຊົ່າທັງໝົດ ຍົກເວັ້ນການໃຫ້ເຊົ່າໄລຍະສັ້ນ ແລະ ການເຊົ່າຊັບສິນທີ່ມີມູນຄ່າຕ່ຳ. ອີງໃສ່ໃນໃນບົດອະທິບາຍເລກທີ 2.12 ສຳລັບນະໂຍບາຍການບັນຊີເລີ່ມແຕ່ວັນທີ 1 ມັງກອນ 2021. ມາດຕະຖານໃຫ້ຄວາມຮຽກຮ້ອງຕ້ອງການໃນການເຊື່ອມຕໍ່ສະເພາະ ແລະ ການໃຊ້ງານທີ່ໃຊ້ໄດ້ເຊິ່ງທະນາຄານໄດ້ນຳໃຊ້.

- ການເຊົ່າໃນເມື່ອກ່ອນໄດ້ຖືກນັບເປັນການເຊົ່າໃນການດຳເນີນງານ

## 2 **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

### *2.3 ການປ່ຽນແປງນະໂຍບາຍການບັນຊີ ແລະ ການເປີດເຜີຍ* (ຕໍ່)

#### *2.3.2 ຄ່າເຊົ່າ* (ຕໍ່)

ທະນາຄານໄດ້ຮັບຮູ້ສິດການນຳໃຊ້ຊັບສິນ ແລະ ໜີ້ສິນຄ່າເຊົ່າສຳລັບສັນຍາເຊົ່າໄດ້ຖືກຈັດປະເພດເປັນການເຊົ່າເພື່ອການດຳເນີນງານ, ຍົກເວັ້ນການເຊົ່າໄລຍະສັ້ນ ແລະ ການເຊົ່າຊັບສິນທີ່ມີມູນຄ່າຕໍ່າ. ສິດທິໃນການນຳໃຊ້ຊັບສິນ ສຳລັບການເຊົ່າສ່ວນຫຼາຍ ແມ່ນໄດ້ຖືກຮັບຮູ້ໂດຍອີງໃສ່ຈຳນວນທີ່ຖືທີ່ເທົ່າກັບມາດຕະຖານດັ່ງກ່າວທີ່ຖືກນຳໃຊ້ເຂົ້າໃນການປະຕິບັດ, ນອກເໜືອຈາກການນຳໃຊ້ອັດຕາການກູ້ຢືມທີ່ເພີ່ມຂຶ້ນໃນວັນທີເລີ່ມຕົ້ນປະຕິບັດ. ໃນສັນຍາເຊົ່າບາງຈຳນວນ, ສິດທິການນຳ ໃຊ້ຊັບສິນແມ່ນໄດ້ຖືກຮັບຮູ້ບົນພື້ນຖານຈຳນວນທີ່ເທົ່າ ກັບ ໜີ້ສິນການເຊົ່າ, ດັບປັບລາຍການຈ່າຍລ່ວງໜ້າ ແລະ ການຈ່າຍຄ່າເຊົ່າຄ້າງຈ່າຍທີ່ກ່ຽວຂ້ອງ. ໜີ້ສິນຄ່າເຊົ່າຖືກຮັບຮູ້ໂດຍອີງໃສ່ມູນຄ່າປັດຈຸບັນຂອງການຈ່າຍຄ່າເຊົ່າທີ່ຍັງເຫຼືອ, ຫຼຸດການນຳໃຊ້ ອັດຕາການກູ້ຢືມທີ່ເພີ່ມຂຶ້ນໃນວັນທີທີ່ເລີ່ມການປະຕິບັດ

ທະນາຄານຍັງໄດ້ນຳໃຊ້ລາຍຮັບທີ່ໃຊ້ໄດ້ໃນການປະຕິບັດຕົວຈິງທີ່ມີຢູ່ເຊິ່ງໃນນັ້ນ:

- ນຳໃຊ້ອັດຕາການຫຼຸດລົງດຽວກັບບົດບັນທຶກການເຮັດວຽກຂອງຜູ້ເຊົ່າຢ່າງສົມເຫດສົມຜົນ;
- ອີງໃສ່ຜົນການປະເມີນຜົນຂອງການເຊົ່າວ່າມີຄວາມຫຍຸ້ງຍາກໃນການນຳໃຊ້ກ່ອນວັນທີທີ່ເລີ່ມນຳໃຊ້;

ປະຕິບັດຂໍ້ຍົກເວັ້ນການເຊົ່າໄລຍະສັ້ນໃຫ້ແກ່ສັນຍາເຊົ່າທີ່ມີກຳນົດພາຍໃນ 12 ເດືອນນັບແຕ່ວັນທີ່ໄດ້ຮັບການປະຕິບັດໃນເບື້ອງຕົ້ນ;

- ບໍ່ລວມຄ່າໃຊ້ຈ່າຍໂດຍກົງໃນເບື້ອງຕົ້ນຈາກການວັດແທກສິດທິຂອງການນຳໃຊ້ຊັບສິນ ໃນວັນທີທີ່ປະຕິບັດໃນວັນທີທີ່ເລີ່ມນຳໃຊ້;
- ນຳໃຊ້ໃນການກຳນົດເງື່ອນໄຂການເຊົ່າບ່ອນທີ່ສັນຍາປະກອບມີທາງເລືອກໃນການຕໍ່ສັນຍາ ຫຼື ຍົກເລີກສັນຍາເຊົ່າ.

ອີງຕາມຂ້າງເທິງ, ນະວັນທີ 1 ມັງກອນ 2021:

- ສິດການນຳໃຊ້ຊັບສິນ 1,750 ລ້ານກີບ ໄດ້ຖືກຈັດປະເພດ ແລະ ໄດ້ນຳສະເໜີໃນໃບລາຍງານຖານະການເງິນ ພາຍໃຕ້ "ສິດການນຳໃຊ້ຊັບສິນ".
- ສິດການນຳໃຊ້ຊັບສິນເພີ່ມ 5,961 ລ້ານກີບ ແມ່ນໄດ້ຖືກຮັບຮູ້ ແລະ ໄດ້ນຳສະເໜີໃນໃບລາຍງານຖານະການເງິນ ພາຍໃຕ້ "ສິດການນຳໃຊ້ຊັບສິນ".
- ໜີ້ສິນຕາມສັນຍາເຊົ່າເພີ່ມ 5,961 ລ້ານກີບ (ລວມໃນ "ໜີ້ສິນອື່ນໆ") ແມ່ນໄດ້ຖືກຮັບຮູ້ ແລະ ນຳໃຊ້ວິທີສ່ວນຫຼຸດກະແສເງິນສົດ.
- ການນຳໃຊ້ IFRS 16 ບໍ່ມີຜົນກະທົບຕໍ່ກັບກຳໄລສະສົມຂອງທະນາຄານ ແລະ ບໍ່ມີຜົນກະທົບຕໍ່ກັບອັດຕາສ່ວນ CAR

ໜີ້ສິນຄ່າເຊົ່ານະວັນທີ 01 ມັງກອນ 2021 ສາມາດສົມທຽບໃສ່ສັນຍາຄ່າເຊົ່າໃນການດຳເນີນງານນະວັນທີ 31 ທັນວາ 2020 ໄດ້ດັ່ງລຸ່ມນີ້:

## 2 ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.3 *ການປ່ຽນແປງນະໂຍບາຍການບັນຊີ ແລະ ການເປີດເຜີຍ* (ຕໍ່)

#### 2.3.2 *ຄ່າເຊົ່າ* (ຕໍ່)

| | *ລ້ານກີບ* |
|---|---|
| **ສັນຍາຄ່າເຊົ່າໃນການດຳເນີນງານ ນະວັນທີ 31 ທັນວາ 2020** | **8,398** |
| ຖ່ວງນ້ຳໜັກສະເລ່ຍອັດຕາການກູ້ຢືມສ່ວນເພີ່ມສະເລ່ຍ ນະວັນທີ 1 ມັງກອນ 2021 | 6.35% |
| ສັນຍາຄ່າເຊົ່າໃນການດຳເນີນງານຄິດໄລ່ຫຼຸດນະວັນທີ 1 ມັງກອນ 2021 | 5,961 |
| **ລົບ:** | |
| ສັນຍາທີ່ກ່ຽວຂ້ອງກັບການເຊົ່າໄລຍະສັ້ນ | - |
| ສັນຍາທີ່ກ່ຽວຂ້ອງກັບການເຊົ່າຊັບສິນທີ່ມີມູນຄ່າຕ່ຳ | - |
| **ບວກ:** | |
| ການຊຳລະຄ່າເຊົ່າທີ່ກ່ຽວຂ້ອງກັບໄລຍະການຕໍ່ອາຍຸບໍ່ໄດ້ລວມຢູ່ໃນສັນຍາການເຊົ່າສັນຍາເພື່ອການດຳເນີນງານ ນະວັນທີ 31 ທັນວາ 2021 | - |
| **ໜີ້ສິນຕາມສັນຍາເຊົ່າ ນະວັນທີ 1 ມັງກອນ 2021** | **5,961** |

### 2.4 *ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ*

ລາຍຮັບ ແລະ ລາຍຈ່າຍດອກເບ້ຍໄດ້ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ ໂດຍອີງຕາມຫຼັກການແບບຄ້າງຮັບຄ້າງຈ່າຍທີ່ນຳໃຊ້ວິທີການຄິດໄລ່ແບບສະເໝີຕົວ ແລະ ອັດຕາດອກເບ້ຍທີ່ຖືກກຳນົດໄວ້ໃນສັນຍາເງິນກູ້ ແລະ ເງິນຝາກຂອງລູກຄ້າ.

ການຮັບຮູ້ລາຍຮັບດອກເບ້ຍຄ້າງຮັບຈະຖືກລະງັບກໍ່ຕໍ່ເມື່ອເງິນກູ້ກາຍເປັນໜີ້ທີ່ບໍ່ເກີດດອກອອກຜົນ (*ບົດອະທິບາຍເລກທີ 2.8* ນິຍາມຂອງເງິນກູ້ບໍ່ເກີດດອກອອກຜົນ) ຫຼື ເມື່ອຜູ້ບໍລິຫານ ເຊື່ອວ່າຜູ້ກູ້ຢືມບໍ່ມີຄວາມສາມາດຊຳລະຄືນໄດ້ທັງຕົ້ນທຶນ ແລະ ດອກເບ້ຍ. ລາຍຮັບດອກເບ້ຍເງິນກູ້ດັ່ງກ່າວແມ່ນໄດ້ຖືກບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານກໍ່ຕໍ່ເມື່ອໄດ້ຮັບເງິນຕົວຈິງ.

### 2.5 *ການຮັບຮູ້ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າ*

ຄ່າທຳນຽມ ແລະ ຄ່າບໍລິການ ແມ່ນປະກອບດ້ວຍບັນດາຄ່າທຳນຽມທີ່ໄດ້ຮັບຈາກການໂອນເງິນ (ລວມທັງການຊຳລະສະສາງທາງການຄ້າ), ຄ່າທຳນຽມທີ່ເກີດຂຶ້ນສຳລັບບັນດາທຸລະກຳການແລກປ່ຽນເງິນຕາຕ່າງປະເທດ, ແລະ ຄ່າທຳນຽມທີ່ເກີດຂຶ້ນຈາກການຄ້ຳປະກັນທາງການເງິນ.

ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າໄດ້ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານອີງຕາມຫຼັກການເງິນສົດ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.6 ເງິນສົດ ແລະ ທຽບເທົ່າເງິນສົດ*

ເງິນສົດ ແລະ ທຽບເທົ່າເງິນສົດແມ່ນລວມມີເງິນສົດ ແລະ ການລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງໂດຍມີອາຍຸຄົບກຳນົດຕໍ່າກວ່າ 30 ວັນ ເຊິ່ງພ້ອມທີ່ຈະປ່ຽນເປັນເງິນສົດໃນຈຳນວນທີ່ຮູ້ໄດ້ ແລະ ບັນຊີໜີ້ຕ້ອງຮັບຈາກທະນາຄານອື່ນທີ່ມີອາຍຸຄົບກຳນົດຕໍ່າກວ່າ 30 ວັນ.

### *2.7 ເງິນໃຫ້ກູ້ຢືມໃຫ້ແກ່ລູກຄ້າ*

ເງິນໃຫ້ກູ້ຢືມໃຫ້ແກ່ລູກຄ້າ ແມ່ນຖືກຮັບຮູ້ຕາມຕົ້ນທຶນ ແລະ ຖືກລາຍງານຕາມຍອດຄ້າງຊຳລະ ລົບໃຫ້ ເງິນແຮສະເພາະສຳລັບເງິນກູ້ຢືມທີ່ບໍ່ເກີດດອກອອກຜົນ.

### *2.8 ການຈັດຊັ້ນເງິນກູ້ ແລະ ເງິນແຮສຳລັບເງິນກູ້*

*ການຈັດຊັ້ນເງິນກູ້*

ອີງຕາມຂໍ້ຕົກລົງເລກທີ 512/ທຫລ (“ທຫລ 512”)ໂດຍທະນາຄານແຫ່ງ ສປປ ລາວ ລົງວັນທີ 29 ມິຖຸນາ 2018 ແລະ ຄຳແນະນຳຈັດຕັ້ງປະຕິບັດເລກທີ 898/ກຄທທ (“ທຫລ 898”) ລົງວັນທີ 14 ພະຈິກ 2018, ທະນາຄານ ຈັດຊັ້ນເປັນເງິນກູ້ເປັນ 5 ກຸ່ມ ອີງຕາມການຊຳລະຄືນດອກເບ້ຍ ແລະ ປັດໄຈທາງດ້ານຄຸນນະພາບອື່ນໆ. ເງິນກູ້ທີ່ຖືກຈັດປະເພດເປັນໜີ້ປົກກະຕິ (ກຸ່ມ A) ຫຼື ໜີ້ຄວນເອົາໃຈໃສ່ (ກຸ່ມ B) ຈະຖືກພິຈາລະນາເປັນເງິນກູ້ທີ່ເກີດດອກອອກຜົນ. ເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ຕໍ່າກວ່າມາດຕະຖານ (ກຸ່ມ C) ຫຼື ສົງໄສ (ກຸ່ມ D) ແລະ ໜີ້ສູນ (ກຸ່ມ E) ແມ່ນໄດ້ຖືກພິຈາລະນາເປັນເງິນກູ້ທີ່ບໍ່ເກີດດອກອອກຜົນ.

ກ່ຽວກັບເງິນກູ້ທີ່ກ່ຽວຂ້ອງກັບໂຄງການພັດທະນາໂຄ່ງລ່າງພື້ນຖານຈາກລັດຖະບານ, ທີ່ຄ້າງຊຳລະແຕ່ການຄ້າງຊຳລະດັ່ງກ່າວແມ່ນຢູ່ພາຍໃນກຳນົດເວລາຂອງລັດຖະບານ, ທະນາຄານແມ່ນໄດ້ຮັບອະນຸຍາດໃຫ້ຈັດຊັ້ນໜີ້ເປັນໜີ້ຄວນເອົາໃຈໃສ່ ອີງຕາມແຈ້ງການເລກທີ 172/ທຫລ ວັນທີ 15 ພຶດສະພາ 2019 ອອກໂດຍ ທະນາຄານແຫ່ງ ສປປ ລາວ.

ພ້ອມກັນນັ້ນທາງທະນາຄານຍັງໄດ້ນຳໃຊ້ຂໍ້ຕົກລົງ ເລກທີ 238/ທຫລ ລົງວັນທີ 26 ມີນາ 2020 ແລະ ບົດແນະນຳ ສະບັບເລກທີ 249/ທຫລ ລົງວັນທີ 11 ພຶດສະພາ 2020 ໂດຍທະຄານແຫ່ງ ສປປ ລາວ ແລະ ແຈ້ງການຂະຫຍາຍເວລາ ເລກທີ 254/ກຄທ ລົງວັນທີ 05 ພຶດສະພາ2021 ກ່ຽວກັບການປັບປຸງໂຄງສ້າງໜີ້, ການຂະຫຍາຍ ແລະ ການຮັກສາການຈັດຊັ້ນເງິນກູ້ ເພື່ອຊ່ວຍລູກໜີ້ທີ່ໄດ້ຮັບກະທົບຈາກການແຜ່ລະບາດຂອງພະຍາດ Covid-19. ດັ່ງນັ້ນ, ທະນາຄານຈຶ່ງໄດ້ປັບໂຄງສ້າງເງິນກູ້ທີ່ມີເງື່ອນໄຂຄົບຖ້ວນ ແລະ ຮັກສາການຈັດເງິນກູ້ໄວ້ຄືເກົ່າ ກ່ອນວັນທີ 01 ມັງກອນ 2020.

*ຄັງເງິນແຮ*

ອີງຕາມຂໍ້ຕົກລົງ ເລກທີ ທຫລ 512 ແລະ ຄຳແນະນຳຈັດຕັ້ງປະຕິບັດ ເລກທີ 898, ທະນາຄານສ້າງຄັງແຮເງິນກູ້ຕາມການຈັດຊັ້ນໜີ້ ດັ່ງລຸ່ມນີ້:

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.8 ການຈັດຊັ້ນເງິນກູ້ ແລະ ເງິນແຮສຳລັບເງິນກູ້* (ຕໍ່)

| *ກຸ່ມ* | *ອັດຕາເງິນແຮ* | *ປະເພດຄັງເງິນແຮ (i)* | *ການບັນຊີສຳລັບຍອດເຫຼືອເງິນແຮ (ii)* | *ການບັນຊີສຳລັບ ສ່ວນປ່ຽນແປງໃນຍອດເຫຼືອເງິນແຮ (iii)* |
|---|---|---|---|---|
| *ເງິນກູ້ທີ່ເກີດດອກອອກຜົນ* | | | | |
| A | 0.5% | ຄັງເງິນແຮທົ່ວໄປ | ໃນສ່ວນທຶນເຈົ້າຂອງ | ລາຍຈ່າຍອື່ນໆ/ລາຍຮັບອື່ນໆ |
| B | 3.0% | ຄັງເງິນແຮສະເພາະ | ຫັກອອກຍອດເຫຼືອເງິນກູ້ | ລາຍຈ່າຍອື່ນໆ/ລາຍຮັບອື່ນໆ |
| *ເງິນກູ້ທີ່ບໍ່ເກີດດອກອອກຜົນ* | | | | |
| C | 20.0% | ຄັງເງິນແຮສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບ ໜີ້ NPL |
| D | 50.0% | ຄັງເງິນແຮສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບ ໜີ້ NPL |
| E | 100.0% | ຄັງເງິນແຮສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບ ໜີ້ NPL |

(i) ຈຳນວນເງິນແຮແມ່ນຖືກຄິດໄລ່ດ້ວຍສູດຄິດໄລ່ດັ່ງລຸ່ມນີ້:

ກ. ຄັງແຮທົ່ວໄປສຳລັບເງິນກູ້ = ອັດຕາເງິນແຮ x ຍອດເງິນກູ້ທີ່ຍັງເຫຼືອ

ຂ. ຄັງເງິນແຮສະເພາະ = ອັດຕາເງິນແຮ x (ຍອດເງິນກູ້ທີ່ຍັງເຫຼືອ - ມູນຄ່າຫຼຸດຂອງຫຼັກຊັບຄ້ຳປະກັນ)
*ເຊິ່ງທະນາຄານໄດ້ເລືອກທີ່ຈະລວມເອົາມູນຄ່າຫຼຸດຂອງຫຼັກຊັບຄ້ຳປະກັນເຂົ້າໃນສູດຄິດໄລ່ເງິນແຮ ດັ່ງທີ່ໄດ້ອະນຸຍາດໄວ້ໃນ ຂໍ້ຕົກລົງ ເລກທີ ທຫລ 512 ແລະ ຄຳແນະນຳຈັດຕັ້ງປະຕິບັດ 898.*

(ii) ຍອດເຫຼືອເງິນແຮຂອງເງິນກູ້*ທີ່ຖືກຈັດເປັນກຸ່ມ A* ແມ່ນຈະຖືກບັນທຶກລົງໃນໃບລາຍງານຖານະການເງິນຢູ່ “ຄັງແຮທົ່ວໄປສຳລັບເງິນກູ້” ພາຍໃຕ້ທຶນ ແລະ ຄັງສຳຮອງຂອງທະນາຄານ.

ຍອດເຫຼືອສະສົມຂອງຄັງເງິນແຮຂອງ *ເງິນກູ້ທີ່ຖືກຈັດຢູ່ໃນກຸ່ມ B* ແລະ ເງິນກູ້ທີ່ບໍ່ເກີດດອກອອກຜົນ ແມ່ນໄດ້ບັນທຶກໃນໃບລາຍງານຖານະການເງິນ ຢູ່ “ເງິນກູ້ໃຫ້ລູກຄ້າ, ຫຼັງຫັກເງິນແຮສະເພາະສຳລັບກິດຈະກຳສິນເຊື່ອ”.

(iii) ສ່ວນປ່ຽນແປງສຳລັບເງິນແຮຂອງ*ເງິນກູ້ທີ່ເກີດດອກອອກຜົນ* ແມ່ນຖືກບັນທຶກໃນໃບລາຍງານຜົນການດຳເນີນງານຢູ່ “ລາຍຈ່າຍຈາກການດຳເນີນງານອື່ນໆ” ສຳລັບລາຍຈ່າຍເງິນແຮ ແລະ “ລາຍຮັບຈາກການດຳເນີນງານອື່ນໆ” ສຳລັບການເກັບຄືນລາຍຈ່າຍເງິນແຮ.

ສ່ວນປ່ຽນແປງສຳລັບເງິນແຮຂອງ *ເງິນກູ້ທີ່ບໍ່ເກີດດອກອອກຜົນ* ແມ່ນຖືກບັນທຶກໃນໃບລາຍງານຜົນການດຳເນີນງານ ຢູ່ “ລາຍຈ່າຍ/(ເກັບຄືນ)ເງິນແຮສຸດທິ ໄວ້ເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ”.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.9 ການລົງທຶນໃນຫຼັກຊັບ*

*ຫຼັກຊັບທີ່ຖືໄວ້ຈົນຄົບກຳນົດ*

ການລົງທຶນໃນຫລັກຊັບທີ່ຈະຖືໄວ້ຈົນຄົບກຳນົດ ແມ່ນຫລັກຊັບໜີ້ທີ່ມີກຳນົດ ຫລື ການຊຳລະທີ່ມີກຳນົດ ແລະ ມື້ຄົບກຳນົດ ເຊິ່ງທະນາຄານມີຄວາມປະສົງ ແລະ ສາມາດຖືໄວ້ຈົນຄົບກຳນົດເພື່ອສ້າງຜົນໄດ້ຮັບດອກເບ້ຍ. ຫລັກຊັບເຫລົ່ານັ້ນຖືກກຳນົດມູນຄ່າ ແລະ ມື້ຄົບກຳນົດ. ເມື່ອມັນຖືກຂາຍກ່ອນມື້ຄົບກຳນົດຫລັກຊັບເຫລົ່ານັ້ນຈະຖືກຈັດຊັ້ນເປັນຫລັກຊັບການຄ້າ ຫລື ຫລັກຊັບພ້ອມທີ່ຈະຂາຍ.

ຫລັກຊັບທີ່ຖືໄວ້ຈົນຄົບກຳນົດແມ່ນຖືກຮັບຮູ້ເປັນມູນຄ່າ ແລະ ສະແດງອອກເປັນມູນຄ່າ. ຄ່າເບ້ຍປະກັນແມ່ນຕັດບັນຊີສ່ວນເກີນ ແລະ ສ່ວນຫຼຸດຈາກການຊື້ຫຼັກຊັບໃນງົບກຳໄລຂາດທຶນ ໂດຍໃຊ້ວິທີແບບສະເໝີຕົວ ກວມລວມເອົາປີທີ່ຊື້ຫຼັກຊັບຈົນຮອດມື້ຄົບກຳນົດ.

ເປັນແຕ່ລະໄລຍະ, ຫລັກຊັບທີ່ຖືໄວ້ຈົນຄົບກຳນົດ ແມ່ນຂຶ້ນກັບການທົບທວນຄືນການເຊື່ອມມູນຄ່າ. ຄັງແຮຄ່າເສື່ອມຂອງຫລັກຊັບເຫລົ່ານັ້ນ ແມ່ນກຳນົດຂຶ້ນເມື່ອເຫັນວ່າມູນຄ່າຍຸດຕິທຳຕ່ຳກ່ວາມູນຄ່າເດີມຫລາຍ ຫລື ຕໍ່ເນື່ອງເປັນເວລາຍາວນານ. ຄັງແຮຄ່າເສື່ອມແມ່ນໄດ້ຖືກຮັບຮູ້ເປັນ "ກຳໄລ/(ຂາດທຶນ) ຈາກການລົງທຶນໃນ ຫລັກຊັບ" ໃນໃບລາຍງານຜົນການດຳເນີນງານ.

### *2.10 ຊັບສົມບັດຄົງທີ່*

ຊັບສົມບັດຄົງທີ່ລວມມີຊັບສົມບັດຄົງທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ. ຊັບສົມບັດຄົງທີ່ມີຕົວຕົນປະກອບມີ: ອາຄານ ແລະ ການປັບປຸງ, ເຄື່ອງໃຊ້ຫ້ອງການ, ພາຫະນະ ແລະ ເຟີນີເຈີ ແລະ ເຄື່ອງຕົບແຕ່ງ. ຊັບສົມບັດຄົງທີ່ບໍ່ມີຕົວຕົນປະກອບມີ: ຊອບແວຄອມພິວເຕີ ແລະ ສິດນຳໃຊ້ທີ່ດິນ.

ຊັບສົມບັດຄົງທີ່ໄດ້ຖືກລາຍງານຕາມຕົ້ນທຶນ ລົບໃຫ້ ຄ່າຫຼຸ້ຍຫ້ຽນສະສົມ ຫຼື ຄ່າເສື່ອມສະສົມ, ຖ້າມີ.

ຕົ້ນທຶນຂອງຊັບສົມບັດປະກອບດ້ວຍ ມູນຄ່າຊື້ ບວກກັບຄ່າໃຊ້ຈ່າຍທີ່ກ່ຽວຂ້ອງທາງກົງອື່ນໆ ໃນການເຮັດໃຫ້ຊັບສິນຢູ່ໃນສະພາບທີ່ພ້ອມໃຊ້ງານ.

ບັນດາຄ່າໃຊ້ຈ່າຍສຳລັບການຊື້ເພີ່ມເຕີມ, ການປັບປຸງ ແລະ ການຕໍ່ອາຍຸ ຈະຖືກຈົດເຂົ້າເປັນທຶນ ແລະ ລາຍຈ່າຍສຳລັບຄ່າບຳລຸງຮັກສາ ແລະ ສ້ອມແປງ ຈະຖືກຈົດເຂົ້າ ແລະ ສະແດງຢູ່ໃນບົດລາຍງານຜົນໄດ້ຮັບ.

ເມື່ອຊັບສົມບັດຖືກຂາຍ ຫຼື ສະສາງອອກ, ຕົ້ນທຶນ ແລະ ຄ່າຫຼຸ້ຍຫ້ຽນສະສົມຈະຖືກຍ້າຍອອກຈາກໃບລາຍງານຖານະທາງການເງິນ ແລະ ສ່ວນຕ່າງຈາກກຳໄລ ຫຼື ຂາດທຶນຈາກການສະສາງຈະຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.11 ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມຊັບສິນບັດຄົງທີ່*

ການຫັກຄ່າຫຼູ້ຍຫ້ຽນ ແລະ ການຫັກຄ່າເສື່ອມຂອງຊັບສິນບັດຄົງແມ່ນທີ່ຖືກຄິດໄລ່ດ້ວຍວິທີເສັ້ນຊື່ດ້ວຍອັດຕາທີ່ກຳນົດຕາມອາຍຸການນຳໃຊ້ທີ່ຄາດຄະເນໂດຍສອດຄ່ອງກັບກົດໝາຍສ່ວຍສາອາກອນຂອງລາວສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນບັງຄັບໃຊ້ນັບແຕ່ ຫຼື ພາຍຫຼັງວັນທີ 01 ມັງກອນ 2020 ອອກໂດຍປະທານສະພາແຫ່ງຊາດ. ອັດຕາປະຈຳປີທີ່ນຳໃຊ້ມີດັ່ງລຸ່ມນີ້:

| | |
|---|---|
| ອາຄານ ແລະ ສິ່ງປັບປຸງ | 5% |
| ອຸປະກອນສຳນັກງານ | 20% |
| ພາຫະນະ | 20% |
| ຊັບສິນບັດທີ່ມີຕົວຕົນອື່ນໆ | 20% |
| ຊອບແວ | 20% |

ສິດນຳໃຊ້ທີ່ດິນທີ່ທະນາຄານຊື້ມາມີອາຍຸການນຳໃຊ້ທີ່ບໍ່ມີກຳນົດ ແມ່ນຖືກລາຍງານໃນມູນຄ່າຕົ້ນທຶນ ແລະ ບໍ່ໄດ້ຫັກຄ່າເສື່ອມ. ຄ່າໃຊ້ຈ່າຍເບື້ອງຕົ້ນຂອງສິດນຳໃຊ້ທີ່ດິນປະກອບມີ ລາຄາຊື້ ແລະ ຄ່າໃຊ້ຈ່າຍຕ່າງໆທີ່ເກີດຂຶ້ນຊຶ່ງສົ່ງຜົນໂດຍກົງກັບການຮັບປະກັນສິດນຳໃຊ້ທີ່ດິນ.

### *2.12 ສັນຍາເຊົ່າ (ນຳໃຊ້ແຕ່ ວັນທີ 1 ມັງກອນ 2021)*

*ສິດໃນການນຳໃຊ້ຊັບສິນ*

ເມື່ອເລີ່ມຕົ້ນເຮັດສັນຍາ, ທະນາຄານຈະປະເມີນການຈັດສັນຍາເຊົ່າ ຫຼື ອີງໃສ່ສັນຍາການເຊົ່າທີ່ເຮັດໃຫ້ຜູ້ຊົມໃຊ້ (ຜູ້ເຊົ່າ) ມີສິດຄວບຄຸມການນຳໃຊ້ຊັບສິນທີ່ໄດ້ລະບຸໄວ້ເປັນໄລຍະເວລາໃດໜຶ່ງໃນການແລກປ່ຽນເພື່ອພິຈາລະນາ. ຖ້າສັນຍາໜຶ່ງປະ ກອບມີຫຼາຍກວ່າໜຶ່ງອົງປະກອບຂອງສັນຍາເຊົ່າ, ຫຼື ການປະສົມປະສານຂອງການໃຫ້ເຊົ່າ ແລະ ການບໍລິການ, ການພິຈາລະ ນາຈະຖືກຈັດສັນໃຫ້ແຕ່ລະປະເພດຂອງສັນຍາການເຊົ່າ ແລະ ອົງປະກອບທີ່ບໍ່ເປັນການເຊົ່າໃນການສະຫຼຸບ ແລະ ແຕ່ລະການວັດແທກຄືນໃໝ່ຂອງສັນຍາບົນພື້ນຖານລາຄາຂາຍທີ່ກ່ຽວຂ້ອງຂອງບັນດາອົງປະກອບເຫຼົ່ານັ້ນ. ທະນາຄານລວມເອົາແຕ່ລະພາກສ່ວນຂອງການໃຫ້ເຊົ່າ ແລະ ທີ່ບໍ່ແມ່ນການໃຫ້ເຊົ່າ ໃນກໍລະນີທີ່ບໍ່ສາມາດແບ່ງແຍກສ່ວນປະກອບທີ່ບໍ່ແມ່ນການໃຫ້ເຊົ່າ.

ທະນາຄານຈະຮັບຮູ້ ສິດນຳໃຊ້ຊັບສິນທີ່ຖືກຕ້ອງໃນວັນທີ ທີ່ເລີ່ມຕົ້ນການເຊົ່າ (ຕົວຢ່າງ, ວັນທີ ທີ່ຊັບສິນພ້ອມໃຊ້ງານ). ສິດນຳໃຊ້ຊັບສິນແມ່ນຖືກຕີມູນຄ່າດ້ວຍມູນຄ່າຕົ້ນທຶນ, ຫັກລົບໃຫ້ຄ່າຫຼຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມມູນຄ່າ, ແລະ ປັບປຸງ. ສຳລັບການຕີມູນຄ່າຄືນໃໝ່ຂອງໜີ້ສິນທີ່ເປັນການເຊົ່າ. ມູນຄ່າຕົ້ນທຶນຂອງສິດນຳໃຊ້ຊັບສິນແມ່ນລວມເອົາຈຳນວນຂອງໜີ້ສິນທີ່ເປັນການເຊົ່າທີ່ໄດ້ຖືກດັດແກ້ສຳລັບການຈ່າຍຄ່າເຊົ່າ ທີ່ໄດ້ປະຕິບັດໄປແລ້ວ ຫຼື ກ່ອນມື້ທີ່ເລີ່ມຕົ້ນນຳໃຊ້, ບວກຄ່າໃຊ້ຈ່າຍທາງກົງໃນເບື້ອງຕົ້ນທີ່ເກີດຂຶ້ນ ແລະ ການຄາດຄະເນຄ່າໃຊ້ຈ່າຍໃນການຮື້ຖອນ ແລະ ເຄື່ອນຍ້າຍຊັບສິນ ຫຼື ການຟື້ນຟູຊັບສິນທີ່ຕິດພັນ ຫຼື ສະຖານທີ່ທີ່ມັນຕັ້ງຢູ່, ຫັກລົບໃຫ້ລາຍຮັບທີ່ໄດ້ຈາກການເຊົ່າ. ໄລຍະເວລາການເຊົ່າລວມເຖິງໄລຍະເວລາທີ່ກວມເອົາທາງເລືອກໃນການຂະຫຍາຍ ຖ້າຫາກວ່າກຸ່ມບໍລິສັດມີຄວາມໝັ້ນໃຈໃນການໃຊ້ທາງເລືອກນັ້ນ. ຍົກເວັ້ນ ກໍລະນີທີ່ທະນາຄານມີຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າຈະໄດ້ຮັບກຳມະສິດໃນຊັບສິນທີ່ໃຫ້ເຊົ່າເມື່ອສິ້ນສຸດໄລຍະເວລາການເຊົ່າການຮັບຮູ້ ສິດນຳໃຊ້ຊັບສິນໃຫ້ເປັນຄ່າຫຼຸ້ຍຫ້ຽນບົນພື້ນຖານຮູບແບບການຄິດໄລ່ແບບເສັ້ນຊື່ຕາມອາຍຸການໃຊ້ງານ. ສິດໃນການນຳໃຊ້ຊັບສິນແມ່ນຂຶ້ນກັບການປະເມີນຄ່າເສື່ອມມູນຄ່າ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.12 ສັນຍາເຊົ່າ (ນຳໃຊ້ແຕ່ ວັນທີ 1 ມັງກອນ 2021)* (ຕໍ່)

*ໜີ້ສິນຕາມສັນຍາເຊົ່າ*

ນະວັນທີ ທີ່ເລີ່ມຕົ້ນຂອງການເຊົ່າ, ທະນາຄານໄດ້ຮັບຮູ້ ໜີ້ສິນທີ່ເກີດຈາກການເຊົ່າຖືກຕີມູນຄ່າຕາມມູນຄ່າປັດຈຸບັນຂອງການຈ່າຍຄ່າເຊົ່າຕາມໄລຍະເວລາຂອງການເຊົ່າ. ການຈ່າຍຄ່າເຊົ່າແມ່ນລວມເຖິງການຈ່າຍແບບຄົງທີ່ (ລວມທັງການຈ່າຍເປັນກຳມະສິດ) ຫັກລົບໃຫ້ລາຍຮັບທີ່ໄດ້ຈາກການເຊົ່າ, ການຈ່າຍຄ່າເຊົ່າຜັນແປ ເຊິ່ງຂຶ້ນກັບດັດສະນີ ຫຼື ອັດຕາ, ແລະ ມູນຄ່າຄາດຄະເນວ່າຈະຈ່າຍພາຍໃຕ້ການຄ້ຳປະກັນມູນຄ່າທີ່ເຫຼືອ. ການຈ່າຍຄ່າເຊົ່າລວມເຖິງລາຄາການໃຊ້ສິດຂອງທາງເລືອກໃນການຊື້ທີ່ສົມເຫດສົມຜົນທີ່ທະນາຄານຈະຕ້ອງໃຊ້ ແລະ ການຈ່າຍຄ່າປັບໄໝສຳລັບການຍົກເລີກສັນຍາຫາກໄລຍະເວລາການເຊົ່າສະທ້ອນໃຫ້ເຫັນເຖິງການໃຊ້ສິດຂອງທະນາຄານໃນການຍົກເລີກ. ຄ່າເຊົ່າຜັນແປທີ່ບໍ່ຂຶ້ນກັບດັດສະນີ ຫຼື ອັດຕາ ຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍໃນຊ່ວງເວລາທີ່ເຫດການ ຫຼື ເງື່ອນໄຂທີ່ເຮັດໃຫ້ເກີດມີການຊຳລະ.

ໃນການຄິດໄລ່ມູນຄ່າປັດຈຸບັນຂອງຄ່າເຊົ່າ, ທະນາຄານນຳໃຊ້ອັດຕາດອກເບ້ຍເງິນກູ້ຢືມສ່ວນເພີ່ມນະມື້ທີ່ເລີ່ມການເຊົ່າ ຖ້າຫາກວ່າອັດຕາດອກເບ້ຍໃນການເຊົ່າບໍ່ສາມາດຫາໄດ້ໂດຍງ່າຍ. ຫຼັງຈາກມື້ທີ່ເລີ່ມການເຊົ່າ, ມູນຄ່າຂອງໜີ້ສິນທີ່ເກີດຈາກການເຊົ່າແມ່ນຖືກເພີ່ມຂຶ້ນຕາມການເພີ່ມຂຶ້ນຂອງດອກເບ້ຍ ແລະ ຫຼຸດລົງສຳລັບຄ່າເຊົ່າທີ່ຕ້ອງຈ່າຍ. ນອກຈາກນີ້ ມູນຄ່າຕາມບັນຊີຂອງໜີ້ສິນທີ່ເກີດຈາກການເຊົ່າຈະຖືກຮັບຮູ້ ກໍຕໍ່ເມື່ອມີການປ່ຽນແປງໃນສ່ວນຂອງໄລຍະເວລາຂອງການຈ່າຍຄ່າເຊົ່າແບບຄົງທີ່ ທີ່ມີເນື້ອຫາສຳຄັນ ຫຼື ການປ່ຽນແປງທາງດ້ານການປະເມີນເພື່ອຊື້ຊັບສິນດັ່ງກ່າວ.

*ສັນຍາເຊົ່າໄລຍະສັ້ນ ແລະ ສັນຍາເຊົ່າຊັບສິນທີ່ມີມູນຄ່າຕ່ຳ*

ທະນາຄານນຳໃຊ້ການຍົກເວັ້ນການຮັບຮູ້ ການເຊົ່າໄລຍະສັ້ນທີ່ມີໄລຍະເວລາ 12 ເດືອນ ຫຼື ໜ້ອຍກວ່າ ນັບແຕ່ມື້ເລີ່ມຕົ້ນ ແລະ ບໍ່ມີຕົວເລືອກໃນການຊື້. ນອກຈາກນີ້ ຍັງໃຊ້ການຍົກເວັ້ນການຮັບຮູ້ ການເຊົ່າຊັບສິນທີ່ມີມູນຄ່າຕ່ຳ ມາເປັນການເຊົ່າຊັບສິນທີ່ຖືກພິຈາລະນາໃຫ້ເປັນມູນຄ່າຕ່ຳ. ການຈ່າຍຄ່າເຊົ່າ ສຳລັບການເຊົ່າທີ່ມີໄລຍະສັ້ນ ແລະ ການເຊົ່າຊັບສິນທີ່ມີມູນຄ່າຕ່ຳ ແມ່ນຖືກຮັບຮູ້ເປັນຄ່າໃຊ້ຈ່າຍຕາມວິທີເສັ້ນຊື່ຕາມອາຍຸສັນຍາເຊົ່າ.

*ການຕັດແກ້ທີ່ສຳຄັນໃນການກຳນົດໄລຍະສັນຍາການເຊົ່າຂອງທາງເລືອກການຕໍ່ສັນຍາຄືນໃໝ່*

ທະນາຄານໄດ້ກຳນົດໄລຍະເວລາການເຊົ່າເປັນໄລຍະເວລາທີ່ບໍ່ສາມາດຍົກເລີກສັນຍາໄດ້, ລວມທັງໄລຍະເວລາທີ່ກວມເອົາທາງເລືອກທີ່ຈະຕໍ່ອາຍຸຂອງການເຊົ່າ ຖ້າຫາກວ່າມັນມີເຫດຜົນທີ່ແນ່ນອນໃນການຈັດຕັ້ງປະຕິບັດ, ຫຼື ໄລຍະເວລາໃດໜຶ່ງທີ່ກວມເອົາທາງເລືອກທີ່ຈະຢຸດສັນຍາເຊົ່າ, ຖ້າຫາກວ່າ ມັນມີເຫດຜົນທີ່ແນ່ນອນວ່າ ບໍ່ຄວນສືບຕໍ່ເຊົ່າຕໍ່ໄປ.

ທະນາຄານນຳໃຊ້ການຕັດສິນໃຈໃນການປະເມີນວ່າ ມີເຫດຜົນທີ່ແນ່ນອນບໍ່ ທີ່ຈະສືບຕໍ່ໃນການຕໍ່ອາຍຸສັນຍາເຊົ່າ. ນັ້ນແມ່ນ ການພິຈາລະນາທຸກໆປັດໄຈທີ່ກ່ຽວຂ້ອງທີ່ຈະສ້າງແຮງຈູງໃຈໃນການຕໍ່ອາຍຸສັນຍາເພື່ອດຳເນີນທຸລະກິດ. ຫຼັງຈາກມື້ທີ່ເລີ່ມການເຊົ່າ, ທະນາຄານໄດ້ໃຫ້ການປະເມີນຄືນສັນຍາເຊົ່າ ຖ້າຫາກມີເຫດການທີ່ສຳຄັນ ຫຼື ການປ່ຽນແປງໃນສະພາບການທີ່ຢູ່ໃນການຄວບຄຸມ ແລະ ສິ່ງຜົນກະທົບຕໍ່ຄວາມສາມາດໃນການດຳເນີນງານ (ຫຼື ການບໍ່ດຳເນີນງານ) ທາງເລືອກໃນການຕໍ່ສັນຍາ (ຕົວຢ່າງ ການປ່ຽນແປງຍຸດທະສາດຂອງທຸລະກິດ). ທະນາຄານໄດ້ລວມເອົາໄລຍະເວລາຕໍ່ອາຍຸສັນຍາເຊົ່າສຳລັບການເຊົ່າສະຖານທີ່ ແລະ ອຸປະກອນໄອທີ ເນື່ອງຈາກຄວາມສຳຄັນຂອງຊັບສິນເຫຼົ່ານີ້ເຂົ້າໃນການດຳເນີນງານຂອງທະນາຄານ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.12 ສັນຍາເຊົ່າ (ນຳໃຊ້ແຕ່ ວັນທີ 1 ມັງກອນ 2021)* (ຕໍ່)

*ການດັດແກ້ທີ່ສຳຄັນໃນການກຳນົດໄລຍະສັນຍາການເຊົ່າຂອງທາງເລືອກການຕໍ່ສັນຍາຄືນໃໝ່ (ຕໍ່)*

ການກຳນົດ ວ່າຂໍ້ຕົກລົງເປັນການເຊົ່າ ຫຼື ບໍ່ເປັນການເຊົ່າ ຫຼື ບໍ່ນັ້ນ ແມ່ນຂຶ້ນຢູ່ກັບເນື້ອຫາຂອງການຕົກລົງ ແລະ ຕ້ອງມີການປະເມີນວ່າການປະຕິບັດຕາມຂໍ້ຕົກລົງນັ້ນຂຶ້ນຢູ່ກັບການໃຊ້ຊັບສິນ ຫຼື ຊັບສິນທີ່ສະເພາະເຈາະຈົງ ແລະ ຂໍ້ຕົກລົງທີ່ບົ່ງບອກເຖິງ ສິດໃນການໃຊ້ຊັບສິນ.

*ທະນາຄານໃນຖານະຜູ້ເຊົ່າ*

ການເຊົ່າ, ບ່ອນທີ່ມີຄວາມສ່ຽງ ແລະ ຜົນປະໂຫຍດທັງໝົດຂອງການເປັນເຈົ້າຂອງສິ່ງທີ່ເຊົ່າບໍ່ຖືກໂອນເຂົ້າທະນາຄານສຳນັກງານໃຫຍ່ການເຮັດສັນຍາເຊົ່າເພື່ອການດຳເນີນງານ. ການຈ່າຍຄ່າເຊົ່າລາຍຈ່າຍການເຊົ່າເພື່ອການດຳເນີນງານໄດ້ຖືກຮັບຮູ້ວ່າເປັນຄ່າໃຊ້ຈ່າຍໃນ ການຄິດໄລ່ກຳໄລ ຫຼື ຂາດທຶນຕາມວິທີການຄິດໄລ່ແບບເສັ້ນຊື່ຕາມໄລຍະເວລາການເຊົ່າ. ຄ່າເຊົ່າທີ່ສົມເຫດສົມຜົນແມ່ນຖືກຮັບຮູ້ວ່າເປັນຄ່າໃຊ້ຈ່າຍ ພາຍໃນຊ່ວງເວລາທີ່ການເຊົ່າເກີດຂຶ້ນ.

### *2.13 ສັນຍາເຊົ່າ (ນຳໃຊ້ກ່ອນ ວັນທີ 1 ມັງກອນ 2021)*

ການກຳນົດ ວ່າຂໍ້ຕົກລົງເປັນການເຊົ່າ ຫຼື ບໍ່ເປັນການເຊົ່າ ຫຼື ບໍ່ນັ້ນ ແມ່ນຂຶ້ນຢູ່ກັບເນື້ອຫາຂອງການຕົກລົງ ແລະ ຕ້ອງມີການປະເມີນວ່າການປະຕິບັດຕາມຂໍ້ຕົກລົງນັ້ນຂຶ້ນຢູ່ກັບການໃຊ້ຊັບສິນ ຫຼື ຊັບສິນທີ່ສະເພາະເຈາະຈົງ ແລະ ຂໍ້ຕົກລົງທີ່ບົ່ງບອກເຖິງ ສິດໃນການໃຊ້ຊັບສິນ.

*ທະນາຄານໃນຖານະຜູ້ເຊົ່າ*

ການເຊົ່າ, ບ່ອນທີ່ມີຄວາມສ່ຽງ ແລະ ຜົນປະໂຫຍດທັງໝົດຂອງການເປັນເຈົ້າຂອງສິ່ງທີ່ເຊົ່າບໍ່ຖືກໂອນເຂົ້າທະນາຄານສຳນັກງານໃຫຍ່ການເຮັດສັນຍາເຊົ່າເພື່ອການດຳເນີນງານ. ການຈ່າຍຄ່າເຊົ່າລາຍຈ່າຍການເຊົ່າເພື່ອການດຳເນີນງານໄດ້ຖືກຮັບຮູ້ວ່າເປັນຄ່າໃຊ້ຈ່າຍໃນ ການຄິດໄລ່ກຳໄລ ຫຼື ຂາດທຶນຕາມວິທີການຄິດໄລ່ແບບເສັ້ນຊື່ຕາມໄລຍະເວລາການເຊົ່າ. ຄ່າເຊົ່າທີ່ສົມເຫດສົມຜົນແມ່ນຖືກຮັບຮູ້ວ່າເປັນຄ່າໃຊ້ຈ່າຍ ພາຍໃນຊ່ວງເວລາທີ່ການເຊົ່າເກີດຂຶ້ນ.

## 2. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

### *2.14 ຄັງສຳຮອງຕາມລະບຽບການ*

ພາຍໃຕ້ຂໍ້ກຳນົດຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ ລົງວັນທີ 7 ທັນວາ 2018, ທະນາຄານທຸລະກິດໄດ້ຖືກຮຽກຮ້ອງໃຫ້ຮັກສາຄັງສຳຮອງຕາມກຳໄລສຸດທິໃຫ້ເໝາະສົມດັ່ງຕໍ່ໄປນີ້:

- ຄັງແຮຕາມລະບຽບການ
- ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆ

ອີງຕາມ 156, ກົດໝາຍວ່າດ້ວຍວິສາຫະກິດ ລົງວັນທີ 26 ທັນວາ 2013, ເຊິ່ງທະນາຄານທຸລະກິດແມ່ນຕ້ອງໄດ້ມີຄັງສຳຮອງຕາມລະບຽບການໃນອັດຕາ 10% ຂອງກຳໄລຫຼັງຫັກອາກອນ. ເມື່ອຄັງສຳຮອງນີ້ເຖິງ 50% ຂອງທຶນຈົດທະບຽນ, ທະນາຄານອາດຈະໂຈະຄັງແຮດັ່ງກ່າວ ເວັ້ນເສຍແຕ່ໄດ້ກຳນົດໄວ້ໃນກົດໝາຍ.

ກອງທຶນຂະຫຍາຍທຸລະກິດ ແລະ ກອງທຶນອື່ນໆຈະຖືກສ້າງຂຶ້ນຕາມການຕັດສິນໃຈຂອງສະພາບໍລິຫານ. ຕາມນັ້ນ, ທະນາຄານໄດ້ສ້າງຄັງແຮດັ່ງຕໍ່ໄປນີ້ສຳລັບປີທີ່ສິ້ນສຸດ 31 ທັນວາ 2021:

| ຄັງແຮ | % ກຳໄລຫຼັງອາກອນ |
|---|---|
| ຄັງແຮຕາມລະບຽບການ | 10 |
| ຄັງຂະຫຍາຍທຸລະກິດ | - |

### *2.15 ລາຍການເຄື່ອນໄຫວທີ່ເປັນເງິນຕາຕ່າງປະເທດ*

ລາຍການທຸລະກຳທີ່ເປັນສະກຸນເງິນເດີມແມ່ນຖືກບັນທຶກໃນເບື້ອງຕົ້ນຕາມອັດຕາແລກປ່ຽນທັນທີນະມື້ເຮັດທຸລະກຳ. ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນເງິນຕາຕ່າງປະເທດນະມື້ທ້າຍປີແມ່ນໄດ້ຖືກຕີມູນຄ່າເປັນເງິນກີບຕາມອັດຕາແລກປ່ຽນໃນມື້ສ້າງໃບລາຍງານຖານະການເງິນ (ລາຍລະອຽດອັດຕາແລກປ່ຽນເງິນຕາຕ່າງປະເທດທຽບໃສ່ເງິນກີບໃນ ວັນທີ 31 ທັນວາ 2021 ໄດ້ສະແດງຢູ່ຂ້າງລຸ່ມນີ້). ສ່ວນຜິດດ່ຽງທັງໝົດທີ່ເກີດຂຶ້ນຈາກອັດຕາແລກປ່ຽນ ແມ່ນຖືກບັນທຶກເຂົ້າໃນ *"ກຳໄລ/(ຂາດທຶນ)ສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ"* ໃນໃບລາຍງານຜົນການດຳເນີນງານ.

ອັດຕາແລກປ່ຽນທຽບໃສ່ເງິນກີບແມ່ນມີດັ່ງລຸ່ມນີ້:

| | *31 ທັນວາ 2021* | *31 ທັນວາ 2020* |
|---|---|---|
| | *ກີບ* | *ກີບ* |
| ໂດລາສະຫະລັດ ("ໂດລາ") | 11,139.00 | 9,292 |
| ໄທບາດ ("ບາດ") | 346.40 | 333.50 |

## 2. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

### *2.16 ອາກອນກຳໄລ*

ການຄິດໄລ່ເງິນແຮສຳລັບເສຍອາກອນກຳໄລແມ່ນອີງຕາມກຳໄລພາຍໃນໄລຍະປັດຈຸບັນ, ເຊິ່ງອີງຕາມກົດໝາຍສ່ວຍສາອາກອນ ຂອງ ສປປ ລາວ. ທະນາຄານມີພັນທະຈ່າຍອາກອນໃນອັດຕາ 20% ຂອງກຳໄລທັງໝົດກ່ອນຫັກອາກອນ ໂດຍອີງຕາມກົດໝາຍ ວ່າດ້ວຍສ່ວຍສາອາກອນໃໝ່ ເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນບັງຄັບໃຊ້ຫຼັງຈາກວັນທີ 1 ມັງກອນ 2020. ດັ່ງນັ້ນ, ທະນາຄານຖືກເສຍອາກອນໃນອັດຕາ 20% ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2021 (2020:20%). ການແຈ້ງອາກອນຂອງທະນາຄານຕ້ອງໄດ້ຮັບການກວດກາໂດຍກົມສ່ວຍສາອາກອນ. ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນ ອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

*ອາກອນເຍື້ອນຊຳລະ*

ອາກອນເຍື້ອນຊຳລະແມ່ນຖືກຄິດໄລ່ຈາກສ່ວນຕ່າງຊົ່ວຄາວນະມື້ທີ່ອອກບົດລາຍງານລະຫວ່າງຖານອາກອນຂອງຊັບສິນ ແລະ ໜີ້ສິນ ແລະ ມູນຄ່າຕາມບັນຊີເພື່ອຈຸດປະສົງໃນການລາຍງານການເງິນ. ໜີ້ຕ້ອງສົ່ງທາງອາກອນເຍື້ອນຊຳລະແມ່ນຖືກຮັບຮູ້ເປັນສ່ວນຕ່າງອາກອນຊົ່ວຄາວ, ຍົກເວັ້ນເມື່ອໜີ້ສິນທາງອາກອນເຍື້ອນຊຳລະເກີດຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫຼື ໜີ້ສິນ ໃນເວລານັ້ນການເຄື່ອນໄຫວບໍ່ມີຜົນກະທົບຕໍ່ກຳໄລທາງດ້ານບັນຊີ ຫຼື ກຳໄລ ແລະ ຂາດທຶນທາງອາກອນ.

ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງອາກອນເຍື້ອນຊຳລະແມ່ນຖືກໄລ່ລຽງຕາມອັດຕາອາກອນທີ່ຄາດວ່າຈະນຳໄປໃຊ້ພາຍໃນປີ ເມື່ອຊັບສິນຖືກຮັບຮູ້ມູນຄ່າຕົວຈິງ ຫຼື ໜີ້ສິນຖືກສະສາງ ອີງຕາມອັດຕາອາກອນ (ແລະ ກົດໝາຍສ່ວຍສາອາກອນ) ທີ່ໄດ້ປະກາດໃຊ້ນະມື້ກະກຽມໃບລາຍງານຖານະການເງິນ.

ອາກອນພາຍໃນປີ ແລະ ອາກອນເຍື້ອນຊຳລະຈະຖືກຮັບຮູ້ເປັນລາຍຮັບຜົນປະໂຫຍດທາງອາກອນ ຫຼື ລາຍຈ່າຍໃນໃບລາຍງານຜົນການດຳເນີນງານ.

ທະນາຄານໄດ້ຫັກລ້າງໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງອາກອນເຍື້ອນຊຳລະຖ້າຫາກມີສິດບັງຄັບໃຊ້ທາງກົດໝາຍ ແລະ ທະນາຄານມີຄວາມຕັ້ງໃຈທີ່ຈະລາຍງານເປັນມູນຄ່າສຸດທິ.

## 2. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

### *2.17 ຜົນປະໂຫຍດພະນັກງານ*

*ຜົນປະໂຫຍດຫຼັງອອກການ*

ຜົນປະໂຫຍດຫຼັງອອກການຈະຈ່າຍໃຫ້ແກ່ພະນັກງານອອກບຳນານຂອງທະນາຄານ ໂດຍພະແນກຄັງປະກັນສັງຄົມທີ່ຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ທະນາຄານໄດ້ຖືກກຳນົດໃຫ້ປະກອບສ່ວນໃຫ້ແກ່ຜົນປະໂຫຍດຂອງພະນັກງານຫຼັງອອກການ ໂດຍການຈ່າຍປະກັນໄພໃຫ້ແກ່ປະກັນສັງຄົມໃນອັດຕາ 6.00% ຂອງເພດານເງິນຝາກຄ່ຳປະກັນຕົ້ນ ທະນາຄານບໍ່ມີພັນທະກ່ຽວກັບຜົນປະໂຫຍດຂອງພະນັກງານຫຼັງອອກການນອກເໜືອຈາກນີ້.

*ຜົນປະໂຫຍດພາຍຫຼັງຍົກເລີກສັນຍາຈ້າງງານ*

ອີງຕາມມາດຕາ 82 ຂອງກົດໝາຍແຮງງານສະບັບປັບປຸງ ເລກທີ 43/ສພຊ ທີ່ອອກໂດຍປະທານປະເທດຂອງ ສປປ ລາວ ໃນວັນທີ 24 ທັນວາ 2013, ທະນາຄານມີພັນທະຈ່າຍເງິນຊົດເຊີຍໃຫ້ພະນັກງານຜູ້ທີ່ຖືກເລີກຈ້າງເນື່ອງຈາກກໍລະນີດັ່ງຕໍ່ໄປນີ້:

- ຜູ້ອອກແຮງງານຂາດທັກສະພິເສດ ຫຼື ບໍ່ມີສຸຂະພາບທີ່ດີ ແລະ ມີໃບຢັ້ງຢືນການແພດ, ແລະ ຫຼັງຈາກປ່ອຍໃຫ້ຜູ້ອອກແຮງງານປະຕິບັດວຽກອື່ນໆ, ວຽກທີ່ເໝາະສົມກວ່າຕາມຄວາມສາມາດ ແລະ ສຸຂະພາບຂອງເຂົາເຈົ້າ, ແຕ່ວ່າຜູ້ທີ່ມີຄຳຖາມຍັງບໍ່ສາມາດເຮັດວຽກໄດ້;
- ນາຍຈ້າງພິຈາລະນາວ່າຈຳເປັນຕ້ອງຫຼຸດຈຳນວນພະນັກງານເພື່ອປັບປຸງວຽກງານພາຍໃນຫົວໜ່ວຍພະນັກງານ ຫຼັງຈາກທີ່ປຶກສາກັບສະຫະພັນການຄ້າ ຫຼື ຜູ້ຕາງໜ້າພະນັກງານ ຫຼື ພະນັກງານສ່ວນໃຫຍ່ ແລະ ໄດ້ລາຍງານຕໍ່ອົງການຄຸ້ມຄອງແຮງງານ.

ສຳລັບການຍົກເລີກສັນຍາຈ້າງງານໃນຂົງເຂດທີ່ໄດ້ກ່າວມາຂ້າງເທິງນັ້ນ, ນາຍຈ້າງຕ້ອງຈ່າຍເງິນອຸດໜູນເທື່ອດຽວໃຫ້ພະນັກງານໂດຍອີງໃສ່ພື້ນຖານການຄິດໄລ່ 10% ຂອງເງິນເດືອນລ່າສຸດຄູນໃຫ້ຈຳນວນເດືອນທີ່ໄດ້ເຮັດວຽກມາ (ມາດຕາ 90). ນະວັນທີ 31 ທັນວາ 2021, ບໍ່ມີພະນັກງານທະນາຄານຖືກຢຸດຈ້າງຕາມເງື່ອນໄຂທີ່ລະບຸໄວ້ຂ້າງເທິງ. ດັ່ງນັ້ນ ທະນາຄານບໍ່ໄດ້ຫັກຄັງແຮສຳລັບການຍົກເລີກການຈ້າງດັ່ງກ່າວໃນເອກະສານລາຍງານການເງິນ.

## 3. ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ

| | *2021* | *2020* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ລາຍຮັບຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍຈາກ:** | | |
| ທຸລະກຳລະຫວ່າງທະນາຄານ | 6,676 | 4,939 |
| ເງິນກູ້ໃຫ້ແກ່ລູກຄ້າ | 102,478 | 97,829 |
| ການລົງທຶນໃນຫຼັກຊັບ | 369 | - |
| | **109,523** | **102,768** |
| **ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍສຳລັບ:** | | |
| ທຸລະກຳລະຫວ່າງທະນາຄານ | (25,740) | (22,475) |
| ເງິນຝາກລູກຄ້າ | (43,689) | (32,019) |
| ອື່ນໆ | (6,176) | (126) |
| | **(75,605)** | **(54,620)** |
| **ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **33,918** | **48,148** |

## 4. ລາຍຮັບຈາກຄ່າທຳນຽມ ແລະ ການບໍລິການ

| | *2021* | *2020* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ລາຍຮັບຈາກຄ່າທຳນຽມ ແລະ ການບໍລິການຈາກ:** | | |
| ຄ່າທຳນຽມຈາກການໃຫ້ບໍລິການທາງການເງິນ | 7,862 | 6,729 |
| ຄ່າທຳນຽມການໃຫ້ບໍລິການໃນການຊຳລະສະສາງ | 9,365 | 2,038 |
| | **17,227** | **8,767** |
| **ລາຍຈ່າຍຄ່າທຳນຽມ ແລະ ການບໍລິການສຳລັບ:** | | |
| ທຸລະກຳລະຫວ່າງທະນາຄານ | (1,208) | (878) |
| ອື່ນໆ | (7) | (5) |
| | **(1,215)** | **(883)** |
| **ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ** | **16,012** | **7,884** |

## 5. ກຳໄລສຸດທິຈາກການແລກປ່ຽນເງິນຕາຕ່າງປະເທດ

| | *2021* | *2020* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ກຳໄລຈາກການຊື້ຂາຍເງິນຕາຕ່າງປະເທດ | 18,063 | 4,751 |
| ຂາດທຶນຈາກການຊື້ຂາຍເງິນຕາຕ່າງປະເທດ | (2,339) | (1,045) |
| | **15,724** | **3,706** |

## 6. ລາຍຮັບຈາກການດຳເນີນງານອື່ນໆ

| | *2021* | *2020* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ຄ່າທຳນຽມຈາກການໃຫ້ບໍລິການດ້ານທະນາຄານ | 1,991 | 2,431 |
| ລາຍຮັບຈາກການໃຫ້ເຊົ່າ | 1,396 | 1,313 |
| ເກັບຄືນເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ *(ບົດອະທິບາຍເລກທີ 13.2)* | 943 | - |
| ອື່ນໆ | 138 | 115 |
| | **4,468** | **3,859** |

## 7. ເງິນເດືອນ ແລະ ລາຍຈ່າຍອື່ນໆຂອງພະນັກງານ

| | *2021* | *2020* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ຄ່າແຮງງານ ແລະ ເງິນອຸດໜູນ | 26,477 | 27,485 |
| ຄ່າປະກັນສັງຄົມ | 700 | 890 |
| ລາຍຈ່າຍເຝິກອົບຮົມ | 300 | 113 |
| ອື່ນໆ | 157 | 133 |
| | **27,634** | **28,621** |

## 8. ລາຍຈ່າຍໃນການບໍລິຫານອື່ນໆ

| | *2021* | *2020* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ລາຍຈ່າຍການຕະຫຼາດ ແລະ ການສົ່ງເສີມການຕະຫຼາດ | 3,993 | 3,636 |
| ລາຍຈ່າຍຄ່າເຊົ່າຫ້ອງການ | 684 | 1,538 |
| ລາຍຈ່າຍສ້ອມແປງ, ບຳລຸງຮັກສາ ແລະ ບູລະນະຄືນໃໝ່ | 1,376 | 1,618 |
| ລາຍຈ່າຍຄ່າໂທລະຄົມມະນາຄົມ | 1,627 | 1,316 |
| ລາຍຈ່າຍຄ່າໄຟຟ້າ ແລະ ຄ່ານ້ຳ | 823 | 785 |
| ລາຍຈ່າຍຄ່າອຸປະກອນ ແລະ ສິ່ງພິມ | 660 | 625 |
| ລາຍຈ່າຍຄ່າເດີນທາງ | 156 | 288 |
| ລາຍຈ່າຍຄ່າທຳນຽມປະກັນໄພ | 210 | 207 |
| ລາຍຈ່າຍໃນການເຝິກອົບຮົມ, ປະຊຸມ ແລະ ສຳມະນາ | 266 | 520 |
| ລາຍຈ່າຍຄ່ານັກກົດໝາຍ ແລະ ຄ່າບໍລິການຈາກນັກວິຊາການ | 155 | 137 |
| ອື່ນໆ | 2,340 | 2,245 |
| | **12,290** | **12,915** |

## 9. ລາຍຈ່າຍການດຳເນີນງານອື່ນໆ

| | *2021* | *2020* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ລາຍຈ່າຍໃຫ້ແກ່ກອງທຶນປົກປ້ອງຜູ້ຝາກເງິນ | 1,012 | 714 |
| ລາຍຈ່າຍເງິນແຣສຳລັບໜີ້ທີ່ເກີດດອກອອກຜົນ | - | 1,434 |
| ອື່ນໆ | - | 21 |
| | **1,012** | **2,169** |

## 10. ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ

| | *31/12/2021* | *31/12/2020* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ເງິນສົດໃນຄັງ** | **28,824** | **27,450** |
| ເງິນສົດໃນຄັງສະກຸນເງິນກີບ | 13,347 | 11,353 |
| ເງິນສົດໃນຄັງສະກຸນເງິນຕ່າງປະເທດ | 15,477 | 16,097 |
| **ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ** | **463,510** | **145,135** |
| ເງິນຝາກກະແສລາຍວັນ | 448,567 | 124,820 |
| ເງິນຝາກແຮບັງຄັບ *(*)* | 14,938 | 20,310 |
| ເງິນຝາກທຶນຈົດທະບຽນ *(**)* | 5 | 5 |
| | **492,334** | **172,585** |

ບັນຊີເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ລວມມີ ເງິນຝາກກະແສລາຍວັນ, ເງິນຝາກແຮບັງຄັບ ແລະ ເງິນຝາກທຶນຈົດທະບຽນ. ເງິນຝາກທີ່ກ່າວມານັ້ນແມ່ນບໍ່ມີດອກເບ້ຍ.

*(*)* ພາຍໃຕ້ຂໍ້ກຳນົດຂອງ ທຫລ, ທະນາຄານຕ້ອງໄດ້ຮັກສາຄັງແຮເງິນສົດໄວ້ກັບທະນາຄານແຫ່ງ ສປປ ລາວ ໃນຮູບແບບເງິນຝາກແຮບັງຄັບ ເຊິ່ງຖືກຄິດໄລ່ໃນອັດຕາ 3.00% ສຳລັບເງິນກີບ ແລະ 5.00% ສຳລັບສະກຸນເງິນອື່ນ (2020: 4% ແລະ 8%), ໃນ 2 ຄັ້ງຕໍ່ເດືອນ ຂອງຍອດເງິນຝາກລູກຄ້າທີ່ມີກຳນົດຕໍ່າກວ່າ 12 ເດືອນ. ພາຍໃນປີ, ທະນາຄານໄດ້ຮັກສາເງິນຝາກແຮບັງຄັບ ສອດຄ່ອງຕາມຂໍ້ກຳນົດຂອງ ທຫລ.

*(**)* ອີງຕາມດຳລັດ ເລກທີ 02/ນຍ ຂອງທະນາຄານແຫ່ງ ສປປ ລາວ, ທະນາຄານໄດ້ຖືກຮຽກຮ້ອງໃຫ້ຮັກສາຍອດເຫຼືອຕໍ່າສຸດຂອງເງິນຝາກຄໍ້າປະກັນທຶນຈົດທະບຽນກັບທະນາຄານແຫ່ງ ສປປ ລາວ ເຊິ່ງເທົ່າກັບ 25% ຂອງທຶນຈົດທະບຽນຖອກແລ້ວ ເພື່ອຮັກສາຄວາມຕໍ່ເນື່ອງໃນການດຳເນີນງານ. ທະນາຄານໄດ້ຮັບການອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ຕາມໜັງສືແຈ້ງການ ລົງວັນທີ 15 ມັງກອນ 2013 ໃນການຖອນເງິນຈາກບັນຊີເງິນຝາກດັ່ງກ່າວ ເພື່ອນຳໃຊ້ເຂົ້າໃນເງິນທຶນໝູນວຽນ. ນະວັນທີ 31 ທັນວາ 2021, ຍອດເຫຼືອເງິນຝາກທຶນຈົດທະບຽນແມ່ນ 5 ລ້ານກີບ

## 11. ເງິນຝາກຢູ່ທະນາຄານອື່ນ

### *11.1 ເງິນຝາກກະແສລາຍວັນ*

| | *31/12/2021* | *31/12/2020* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ເງິນຝາກກະແສລາຍວັນຢູ່ທະນາຄານພາຍໃນປະເທດ** | **25,168** | **3,753** |
| ທະນາຄານ ພັດທະນາລາວ | 382 | 1,147 |
| ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ | 14,162 | 2,606 |
| ທະນາຄານ ອຸດສະຫະກຳ ແລະ ການຄ້າຈີນ ສາຂານະຄອນຫຼວງ | 10,624 | - |
| **ເງິນຝາກກະແສລາຍວັນຢູ່ທະນາຄານຕ່າງປະເທດ** | **541,233** | **259,882** |
| ທະນາຄານ ຫຸ້ນສ່ວນການຄ້າ ໄຊງ່ອນເທືອງຕື່ນ | 541,231 | 257,646 |
| ທະນາຄານ ເວລຟາຣໂກ (Well Fargo Bank) | - | 2,234 |
| ທະນາຄານ ຊາຄອມ ກຳປູເຈຍ ຈຳກັດ ມະຫາຊົນ | 1 | 2 |
| ທະນາຄານ ຫຸ້ນສ່ວນການຄ້າທະຫານ ສາຂາ ກຳປູເຈຍ | 1 | - |
| | **566,401** | **263,635** |

### *11.2 ເງິນຝາກມີກຳນົດ*

| | *31/12/2021* | *31/12/2020* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ເງິນຝາກມີກຳນົດກັບທະນາຄານພາຍໃນປະເທດ** | | |
| ທະນາຄານ ໄຊງ່ອນ-ຮ່າໂນຍ ລາວ ຈຳກັດ | 33,417 | 57,168 |
| ທະນາຄານ ເອຊີລີດາລາວ ຈຳກັດ | 10,000 | 10,000 |
| ທະນາຄານ ຮ່ວມພັດທະນາ | 22,278 | 37,168 |
| ທະນາຄານ ລາວຈີນ ຈຳກັດ | - | 27,876 |
| ທະນາຄານ ອິນໂດຈີນ | - | 37,168 |
| ທະນາຄານ ເອັດສທີ | - | 18,584 |
| ທະນາຄານ ມາລູຮານ ເຈເປນລາວ | - | 48,584 |
| | **65,695** | **236,548** |

ເງິນຝາກມີກຳນົດໃນສະກຸນເງິນກີບ ທີ່ມີໄລຍະເວລາສິບສອງ (12) ເດືອນ ແລະ ມີອັດຕາດອກເບ້ຍ 6.10% ຕໍ່ປີ.

ເງິນຝາກມີກຳນົດໃນສະກຸນເງິນໂດລາ ທີ່ມີໄລຍະເວລາສາມ (6) ຫາສິບສອງ (12) ເດືອນ ແລະ ມີອັດຕາດອກເບ້ຍ 3.6% ຫາ 3.95% ຕໍ່ປີ.

## 12. ການລົງທຶນໃນຫຼັກຊັບ

| | *31/12/2021* *ລ້ານກີບ* | *31/12/2020* *ລ້ານກີບ* |
|---|---|---|
| **ຫຼັກຊັບທີ່ຖືໄວ້ຈົນຄົບກຳນົດ** | | |
| ພັນທະບັດລັດຖະບານ | 9,161 | - |
| | **9,161** | **-** |

ພັນທະບັດລັດຖະບານ ມີໄລຍະເວລາ 3 ຫາ 10 ປີ ແລະ ມີອັດຕາດອກເບ້ຍ 5.00% ຫາ 6.00%.

## 13. ເງິນກູ້ໃຫ້ລູກຄ້າ, ຫຼັງຫັກເງິນແຮສະເພາະສຳລັບການສູນເສຍສິນເຊື່ອ

| | *31/12/2021* *ລ້ານກີບ* | *31/12/2020* *ລ້ານກີບ* |
|---|---|---|
| ເງິນກູ້ໃຫ້ລູກຄ້າ *(ບົດອະທິບາຍເລກທີ 13.1)* | 991,424 | 1,017,553 |
| ຫັກ ເງິນແຮສະເພາະສຳລັບການສູນເສຍສິນເຊື່ອ | (12,121) | (3,635) |
| *ໃນນັ້ນ:* | | |
| *ໜີ້ຄວນເອົາໃຈໃສ່ (ບົດອະທິບາຍເລກທີ 13.2)* | *(481)* | *(1,175)* |
| *ໜີ້ທີ່ບໍ່ເກີດດອກອອກຜົນ (ບົດອະທິບາຍເລກທີ 13.2)* | *(11,640)* | *(2,460)* |
| | **979,303** | **1,013,918** |

ອັດຕາດອກເບ້ຍເງິນກູ້ໃຫ້ລູກຄ້າພາຍໃນປີ ມີດັ່ງລຸ່ມນີ້:

| | *31/12/2021* *% ຕໍ່ປີ* | *31/12/2020* *% ຕໍ່ປີ* |
|---|---|---|
| ເງິນກູ້ ທີ່ເປັນສະກຸນເງິນ ກີບ | 0.00 - 15.00 | 0.00 - 15.00 |
| ເງິນກູ້ ທີ່ເປັນສະກຸນເງິນ ໂດລາ | 5.00 - 9.00 | 4.50 - 9.05 |
| ເງິນກູ້ ທີ່ເປັນສະກຸນເງິນ ບາດ | 6.00 - 9.00 | 8.00 - 10.00 |

### *13.1 ການວິເຄາະເງິນກູ້ໃຫ້ລູກຄ້າ*

*ການວິເຄາະເງິນກູ້ຕາມສະກຸນເງິນ*

| | *31/12/2021* *ລ້ານກີບ* | *31/12/2020* *ລ້ານກີບ* |
|---|---|---|
| ເງິນກູ້ ແລະ ເງິນລ່ວງໜ້າທີ່ເປັນເງິນ ກີບ | 854,056 | 910,786 |
| ເງິນກູ້ ແລະ ເງິນລ່ວງໜ້າທີ່ເປັນເງິນ ໂດລາ | 116,965 | 70,698 |
| ເງິນກູ້ ແລະ ເງິນລ່ວງໜ້າທີ່ເປັນເງິນ ບາດ | 20,403 | 36,069 |
| | **991,424** | **1,017,553** |

## 13. ເງິນກູ້ໃຫ້ລູກຄ້າ, ຫຼັງຫັກເງິນແຮສະເພາະສຳລັບໜີ້ເສຍ(ຕໍ່)

### *13.1 ການວິເຄາະເງິນກູ້ໃຫ້ລູກຄ້າ* (ຕໍ່)

*ການວິເຄາະເງິນກູ້ຕາມໄລຍະເວລາເງິນກູ້*

| | *31/12/2021*<br>*ລ້ານກີບ* | *31/12/2020*<br>*ລ້ານກີບ* |
|---|---|---|
| ເງິນກູ້ໄລຍະສັ້ນ | 245,791 | 278,341 |
| ເງິນກູ້ໄລຍະກາງ | 263,135 | 253,963 |
| ເງິນກູ້ໄລຍະຍາວ | 482,498 | 485,249 |
| | **991,424** | **1,017,553** |

*ການວິເຄາະເງິນກູ້ຕາມປະເພດຂອງອຸດສາຫະກຳ*

| | *31/12/2021*<br>*ລ້ານກີບ* | *31/12/2020*<br>*ລ້ານກີບ* |
|---|---|---|
| ຂະແໜງການຄ້າ | 169,420 | 161,773 |
| ຂະແໜງການກໍ່ສ້າງ | 47,661 | 85,984 |
| ຂະແໜງການອຸດສາຫະກຳ | 33,900 | 47,812 |
| ຂະແໜງການບໍລິການ | 49,518 | 40,277 |
| ຂະແໜງກະສິກຳ ແລະ ປ່າໄມ້ | 79,057 | 17,191 |
| ບໍລິສັດຂົນສົ່ງ | 360 | 360 |
| ຂະແໜງການຫັດຖະກຳ | 5,720 | 3,373 |
| ຂະແໜງອື່ນໆ | 605,788 | 660,783 |
| | **991,424** | **1,017,553** |

### *13.2 ເງິນແຮສຳລັບການສູນເສຍສິນເຊື່ອ*

ການເຄື່ອນໄຫວຂອງເງິນແຮສຳລັບການສູນເສຍສິນເຊື່ອຂອງທະນາຄານ ພາຍໃນປີ 2021 ມີດັ່ງນີ້:

| | *ເງິນແຮສະເພາະ* | | *ເງິນແຮທົ່ວໄປ* | |
|---|---|---|---|---|
| | *ໜີ້ທີ່ບໍ່ເກີດດອກອອກຜົນ* | *ໜີ້ຄວນເອົາໃຈໃສ່* | *ສຳລັບເງິນກູ້ປົກກະຕິ* | *ລວມ* |
| | *ລ້ານກີບ* | *ລ້ານກີບ* | *ລ້ານກີບ* | *ລ້ານກີບ* |
| **ຍອດເຫຼືອນະວັນທີ 1 ມັງກອນ 2021** | **2,460** | **1,175** | **4,862** | **8,497** |
| ລາຍຈ່າຍເງິນແຮສຸດທິ | 9,180 | (696) | (247) | 8,237 |
| ສ່ວນຕ່າງຈາກອັດຕາແລກປ່ຽນ | - | 2 | 80 | 82 |
| **ຍອດເຫຼືອນະວັນທີ 31 ທັນວາ 2021** | **11,640** | **481** | **4,695** | **16,816** |

## 13. ເງິນກູ້ໃຫ້ລູກຄ້າ, ຫຼັງຫັກເງິນແຮສະເພາະສຳລັບໜີ້ເສຍ (ຕໍ່)

### *13.2 ເງິນແຮສຳລັບການສູນເສຍສິນເຊື່ອ* (ຕໍ່)

ການເຄື່ອນໄຫວຂອງເງິນແຮສຳລັບການສູນເສຍສິນເຊື່ອຂອງທະນາຄານ ພາຍໃນປີ 2020 ມີດັ່ງນີ້:

| | *ເງິນແຮສະເພາະ* | | *ເງິນແຮທົ່ວໄປ* | |
|---|---|---|---|---|
| | *ໜີ້ທີ່ບໍ່ເກີດດອກອອກຜົນ* | *ໜີ້ຄວນເອົາໃຈໃສ່* | *ສຳລັບເງິນກູ້ປົກກະຕິ* | *ລວມ* |
| | *ລ້ານກີບ* | *ລ້ານກີບ* | *ລ້ານກີບ* | *ລ້ານກີບ* |
| **ຍອດເຫຼືອນະວັນທີ 1 ມັງກອນ 2020** | **819** | **344** | **4,231** | **5,394** |
| (ເກັບຄືນ)/ລາຍຈ່າຍ ເງິນແຮສຸດທິ | 1,641 | 831 | 603 | 3,075 |
| ສ່ວນຕ່າງຈາກອັດຕາແລກປ່ຽນ | - | - | 28 | 28 |
| **ຍອດເຫຼືອນະວັນທີ 31 ທັນວາ 2020** | **2,460** | **1,175** | **4,862** | **8,497** |

ລາຍລະອຽດຂອງການຈັດຊັ້ນໜີ້ ແລະ ເງິນແຮຕາມລະບຽບການຂອງ ທຫລ ນະປີທີ່ສິ້ນສຸດ 31 ທັນວາ 2021 ມີດັ່ງລຸ່ມນີ້:

| | *ຍອດເຫຼືອເງິນກູ້* | *ເງິນແຮສຳລັບການສູນເສຍສິນເຊື່ອ* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ເງິນກູ້ທີ່ເກີດດອກອອກຜົນ: | | |
| - *ໜີ້ປົກກະຕິ* | *938,987* | *4,695* |
| - *ໜີ້ຄວນເອົາໃຈໃສ່* | *16,049* | *481* |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ: | | |
| - *ໜີ້ຕ່ຳກວ່າມາດຕະຖານ* | *3,263* | *651* |
| - *ໜີ້ສົງໄສ* | *6,104* | *3,052* |
| - *ໜີ້ສູນ* | *27,031* | *7,937* |
| | **991,424** | **16,816** |

## 13. ເງິນກູ້ໃຫ້ລູກຄ້າ, ຫຼັງຫັກເງິນແຮສະເພາະສຳລັບໜີ້ເສຍ (ຕໍ່)

### *13.2 ເງິນແຮສຳລັບການສູນເສຍສິນເຊື່ອ* (ຕໍ່)

ຜົນຂອງການຈັດຊັ້ນໜີ້ ແລະ ການຫັກເງິນແຮ ຕາມຂໍ້ກຳນົດຂອງ ທຫລ ນະປີທີ່ສິ້ນສຸດ ນະວັນທີ 31 ທັນວາ 2020 ມີດັ່ງລຸ່ມນີ້:

| | *ຍອດເຫຼືອເງິນກູ້*<br>*ລ້ານກີບ* | *ເງິນແຮສຳລັບ*<br>*ການສູນເສຍສິນເຊື່ອ*<br>*ລ້ານກີບ* |
|---|---|---|
| ເງິນກູ້ທີ່ເກີດດອກອອກຜົນ: | | |
| - *ໜີ້ປົກກະຕິ* | 972,476 | 4,862 |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ: | 39,183 | 1,175 |
| - *ໜີ້ຄວນເອົາໃຈໃສ່* | | |
| - *ໜີ້ຕ່ຳກວ່າມາດຕະຖານ* | 1,768 | 354 |
| - *ໜີ້ຕ້ອງສົງໄສ* | 4,039 | 2,019 |
| - *ໜີ້ສູນ* | 87 | 87 |
| | **1,017,553** | **8,497** |

## 14. ຊັບສົມບັດຄົງທີ່

### *14.1 ຊັບສິນພວມຊື້ພວມກໍ່ສ້າງ*

| | *ການພັດທະນາ ຊອບແວ*<br>*ລ້ານກີບ* | *ລວມ*<br>*ລ້ານກີບ* |
|---|---|---|
| **ຕົ້ນທຶນ** | | |
| **ນະວັນທີ 1 ມັງກອນ 2021** | - | - |
| ຮັບຮູ້ເຂົ້າໃໝ່ | 57 | 57 |
| **ນະວັນທີ 31 ທັນວາ 2021** | **57** | **57** |

## 14. ຊັບສິນບັດຄົງທີ່ (ຕໍ່)

### *14.2 ຊັບສິນບັດຄົງທີ່ບໍ່ມີຕົວຕົນ*

ການເຄື່ອນໄຫວຂອງຍອດເຫຼືອຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນ ພາຍໃນປີທີ່ສິ້ນສຸດ ນະວັນທີ 31 ທັນວາ 2021 ມີດັ່ງລຸ່ມນີ້:

| | *ສິດນຳໃຊ້ທີ່ດິນ*<br>*ລ້ານກີບ* | *ຊອບແວ*<br>*ລ້ານກີບ* | *ລວມ*<br>*ລ້ານກີບ* |
|---|---|---|---|
| **ຕົ້ນທຶນ:** | | | |
| ນະວັນທີ 1 ມັງກອນ 2021 | 15,855 | 5,897 | 21,752 |
| ຮັບຮູ້ເຂົ້າໃໝ່ | - | - | - |
| ນະວັນທີ 31 ທັນວາ 2021 | 15,855 | 5,897 | 21,752 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | | | |
| ນະວັນທີ 1 ມັງກອນ 2021 | - | 5,897 | 5,897 |
| ຫັກຄ່າຫຼຸ້ຍຫ້ຽນພາຍໃນປີ | - | - | - |
| ນະວັນທີ 31 ທັນວາ 2021 | - | 5,897 | 6,897 |
| **ມູນຄ່າທີ່ຍັງເຫຼືອສຸດທິ:** | | | |
| ນະວັນທີ 1 ມັງກອນ 2021 | 15,855 | - | 15,855 |
| ນະວັນທີ 31 ທັນວາ 2021 | 15,855 | - | 15,855 |

## 14. ຊັບສິນບັດຄົງທີ່ (ຕໍ່)

### *14.2 ຊັບສິນບັດຄົງທີ່ບໍ່ມີຕົວຕົນ* (ຕໍ່)

ການເຄື່ອນໄຫວຂອງຍອດເຫຼືອຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນ ພາຍໃນປີທີ່ສິ້ນສຸດ ນະວັນທີ 31 ທັນວາ 2020 ມີດັ່ງລຸ່ມນີ້:

| | *ສິດນຳໃຊ້ທີ່ດິນ* *ລ້ານກີບ* | *ຊັອບແວ* *ລ້ານກີບ* | *ລວມ* *ລ້ານກີບ* |
|---|---|---|---|
| **ຕົ້ນທຶນ:** | | | |
| ນະວັນທີ 1 ມັງກອນ 2020 | 14,499 | 5,897 | 20,396 |
| ຮັບຮູ້ເຂົ້າໃໝ່ | 1,356 | - | 1,356 |
| ນະວັນທີ 31 ທັນວາ 2020 | 14,499 | 5,897 | 21,752 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | | | |
| ນະວັນທີ 1 ມັງກອນ 2020 | - | 5,507 | 5,507 |
| ຫັກຄ່າຫຼຸ້ຍຫ້ຽນພາຍໃນປີ | - | 390 | 390 |
| ນະວັນທີ 31 ທັນວາ 2020 | - | 5,897 | 5,897 |
| **ມູນຄ່າທີ່ຍັງເຫຼືອສຸດທິ:** | | | |
| ນະວັນທີ 1 ມັງກອນ 2020 | 14,499 | 390 | 14,889 |
| ນະວັນທີ 31 ທັນວາ 2020 | 15,855 | - | 15,855 |

## 14. ຊັບສິນບັດຄົງທີ່ (ຕໍ່)

### *14.3 ຊັບສິນບັດຄົງທີ່ມີຕົວຕົນ*

ການເຄື່ອນໄຫວຂອງຍອດເຫຼືອຂອງຊັບສິນບັດຄົງທີ່ມີຕົວຕົນ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2021 ມີດັ່ງລຸ່ມນີ້:

| | *ອາຄານ ແລະ ສິ່ງປຸກສ້າງ ລ້ານກີບ* | *ອຸປະກອນສຳນັກງານ ລ້ານກີບ* | *ພາຫະນະ ລ້ານກີບ* | *ຊັບສິນບັດຄົງທີ່ມີຕົວຕົນອື່ນໆ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|---|---|
| **ຕົ້ນທຶນ:** | | | | | |
| ນະວັນທີ 1 ມັງກອນ 2021 | 116,972 | 22,783 | 3,600 | 1,566 | 144,921 |
| ຮັບຮູ້ເຂົ້າໃໝ່ | - | 382 | - | 14 | 396 |
| ສະສາງ | - | - | (381) | - | (381) |
| ນະວັນທີ 31 ທັນວາ 2021 | 116,972 | 23,165 | 3,219 | 1,580 | 144,936 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | | | | | |
| ນະວັນທີ 1 ມັງກອນ 2021 | 49,941 | 16,159 | 3,213 | 1,102 | 70,415 |
| ຫັກຄ່າຫຼຸ້ຍຫ້ຽນພາຍໃນປີ | 7,766 | 1,423 | 210 | 204 | 9,603 |
| ສະສາງ | - | - | (381) | - | (381) |
| ນະວັນທີ 31 ທັນວາ 2021 | 57,707 | 17,582 | 3,043 | 1,306 | 79,638 |
| **ມູນຄ່າທີ່ຍັງເຫຼືອສຸດທິ:** | | | | | |
| ນະວັນທີ 1 ມັງກອນ 2021 | 67,031 | 6,624 | 387 | 464 | 74,506 |
| ນະວັນທີ 31 ທັນວາ 2021 | 59,265 | 5,583 | 176 | 274 | 65,298 |

## 14. ຊັບສິນບັດຄົງທີ່ (ຕໍ່)

### *14.3 ຊັບສິນບັດຄົງທີ່ມີຕົວຕົນ* (ຕໍ່)

ການເຄື່ອນໄຫວຂອງຍອດເຫຼືອຂອງຊັບສິນບັດຄົງທີ່ມີຕົວຕົນ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2020 ມີດັ່ງລຸ່ມນີ້:

| | *ອາຄານ ແລະ ສິ່ງປຸກສ້າງ ລ້ານກີບ* | *ອຸປະກອນ ສຳນັກງານ ລ້ານກີບ* | *ພາຫະນະ ລ້ານກີບ* | *ຊັບສິນບັດຄົງທີ່ ມີຕົວຕົນອື່ນໆ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|---|---|
| **ຕົ້ນທຶນ:** | | | | | |
| ນະວັນທີ 1 ມັງກອນ 2020 | 116,972 | 22,425 | 3,600 | 1,509 | 144,506 |
| ຮັບຮູ້ເຂົ້າໃໝ່ | - | 358 | - | 57 | 415 |
| ນະວັນທີ 31 ທັນວາ 2020 | 116,972 | 22,783 | 3,600 | 1,566 | 144,921 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | | | | | |
| ນະວັນທີ 1 ມັງກອນ 2020 | 43,995 | 12,697 | 2,954 | 897 | 60,543 |
| ຫັກຄ່າຫຼຸ້ຍຫ້ຽນພາຍໃນປີ | 5,946 | 3,462 | 259 | 205 | 9,872 |
| ນະວັນທີ 31 ທັນວາ 2020 | 49,941 | 16,159 | 3,213 | 1,102 | 70,415 |
| **ມູນຄ່າທີ່ຍັງເຫຼືອສຸດທິ:** | | | | | |
| ນະວັນທີ 1 ມັງກອນ 2020 | 72,977 | 9,728 | 646 | 612 | 83,963 |
| ນະວັນທີ 31 ທັນວາ 2020 | 67,031 | 6,624 | 387 | 464 | 74,506 |

## 14. ຊັບສິນບັດຄິງທີ່ (ຕໍ່)

### *14.4 ຊັບສິນບັດຄົງທີ່ມີຕົວຕົນ* (ຕໍ່)

ການເຄື່ອນໄຫວຂອງຍອດເຫຼືອຂອງຊັບສິນບັດຄົງທີ່ມີຕົວຕົນ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2020 ມີດັ່ງລຸ່ມນີ້:

| | *ຊັບສິນບັດຄົງທີ່ມີຕົວຕົນອື່ນໆ* | *ລວມ* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ຕົ້ນທຶນ:** | | |
| ນະວັນທີ 1 ມັງກອນ 2020 | - | - |
| ຮັບຮູ້ເຂົ້າໃໝ່ | 7,711 | 7,711 |
| ນະວັນທີ 31 ທັນວາ 2021 | **7,711** | **7,711** |
| **ຄ່າຫຼຸ້ຍຫ້ຽນສະສົມ:** | | |
| ນະວັນທີ 1 ມັງກອນ 2020 | - | - |
| ຫັກຄ່າຫຼຸ້ຍຫ້ຽນພາຍໃນປີ | 1,060 | 1,060 |
| ນະວັນທີ 31 ທັນວາ 2021 | **1,060** | **1,060** |
| **ມູນຄ່າທີ່ຍັງເຫຼືອສຸດທິ:** | | |
| ນະວັນທີ 1 ມັງກອນ 2020 | - | - |
| ນະວັນທີ 31 ທັນວາ 2021 | **6,651** | **6,651** |

Set out below are the carrying amounts of lease liability and the movements during the year

| | *2021* |
|---|---|
| | *ລ້ານກີບ* |
| **ນະວັນທີ 1 ມັງກອນ 2020** | - |
| ການຮັບຮອງເອົາ IFRS 16 | 5,961 |
| ດອກເບ້ຍຄ້າງ | 408 |
| ການຊຳລະ | (239) |
| ສ່ວນຜິດດ່ຽງຈາກອັດຕາແລກປ່ຽນ | 1,167 |
| **ນະວັນທີ 31 ທັນວາ 2021** | **7,297** |

## 15 ໜີ້ຕ້ອງຮັບດອກເບ້ຍຄ້າງຮັບ

| | 31/12/2021 | 31/12/2020 |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| *ໜີ້ຕ້ອງຮັບດອກເບ້ຍເບ້ຍຄ້າງຮັບຈາກ:* | | |
| ເງິນຝາກຢູ່ທະນາຄານ | 1,372 | 2,769 |
| ການລົງທຶນໃນຫຼັກຊັບ | 369 | - |
| ເງິນກູ້ແກ່ລູກຄ້າ | 12,737 | 15,356 |
| | **14,478** | **18,125** |

## 16 ຊັບສິນອື່ນໆ

| | 31/12/2021 | 31/12/2020 |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ດອກເບ້ຍຈ່າຍລ່ວງໜ້າໃຫ້ລູກຄ້າເງິນຝາກ | 4,415 | 5,710 |
| ລາຍຈ່າຍຈ່າຍລ່ວງໜ້າ | 3,619 | 5,167 |
| ລ່າຍຈ່າຍລ່ວງໜ້າໃຫ້ຜູ້ສະໜອງ | 3,103 | 590 |
| ໜີ້ຄ້າງຮັບຈາກ ທະນາຄານຊາຄອມແບັງ | 343 | 370 |
| ອື່ນໆ | 676 | 412 |
| | **12,156** | **12,249** |

## 17. ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນ

| | 31/12/2021 | 31/12/2020 |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ເງິນຝາກກະແສລາຍວັນຈາກທະນາຄານ ແລະ ສະຖາບັນການເງິນພາຍໃນປະເທດ** | **6,999** | **2,195** |
| ກອງທຶນປະກັນສັງຄົມແຫ່ງຊາດ | 4,331 | 144 |
| ກອງທຶນປົກປ້ອງຜູ້ຝາກເງິນ | 75 | - |
| ສະຫະພັນການຄ້າລາວ, ສະຫວັນນະເຂດ | 1,837 | 1,620 |
| ອື່ນໆ | 756 | 431 |
| **ເງິນຝາກກະແສລາຍວັນຈາກທະນາຄານຕ່າງປະເທດ** | **224,120** | **108,464** |
| ທະນາຄານ ການຄ້າ ໄຊງ່ອນ ເທື່ອງຕືນ | 224,120 | 108,464 |

## 17. ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນ (ຕໍ່)

| | 31/12/2021 | 31/12/2020 |
|---|---|---|
| | ລ້ານກີບ | ລ້ານກີບ |
| **ເງິນຝາກມີກໍານົດຈາກທະນາຄານ ແລະ ສະຖາບັນການເງິນພາຍໃນປະເທດ** | **530,724** | **453,014** |
| ກອງທຶນປະກັນສັງຄົມແຫ່ງຊາດ | 277,000 | 247,000 |
| ກອງທຶນປົກປ້ອງຜູ້ຝາກເງິນ | 25,000 | 30,000 |
| ທະນາຄານໂລກ-ພະແນກ ສົ່ງເສີມທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ | 115,030 | 86,430 |
| ທະນາຄານ ແຫ່ງ ສປປ ລາວ (ກົມບໍລິການທະນາຄານ) | 18,350 | 11,533 |
| ທະນາຄານ ແຫ່ງ ສປປ ລາວ (ກອງທຶນສົ່ງເສີມການເຂົ້າເຖິງແຫຼ່ງທຶນ ໃນ ສປປ ລາວ) | 15,000 | - |
| ບໍລິສັດ ຫຼັກຊັບລ້ານຊ້າງ ມະຫາຊົນ | 7,000 | 7,000 |
| ບໍລິສັດ ອາລີແອັນສ ປະກັນໄພ ລາວ | 13,673 | 14,139 |
| ບໍລິສັດ ລ້ານຊ້າງ ປະກັນໄພ | - | 11,036 |
| ທະນາຄານ ລາວຈີນ ຈໍາກັດ | - | 10,000 |
| ທະນາຄານ ມາລູຮານ ເຈເປນລາວ | - | 27,876 |
| ສະຫະພັນການຄ້າລາວ, ສະຫວັນນະເຂດ | 8,000 | 8,000 |
| ທະນາຄານການຄ້າຕ່າງປະເທດຫວຽດນາມ ປະຈໍາລາວຈໍາກັດ. | 20,000 | - |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 30,000 | - |
| ບໍລິສັດ ປະກັນໄພ ບີເອັສເຮສ ລາວ ຈໍາກັດ | 557 | - |
| ສະຖາບັນ ປັດສະເຕີ ລາວ | 1,114 | - |
| | **761,842** | **563,673** |

ເງິນຝາກມີກໍານົດໃນສະກຸນເງິນກີບ ທີ່ມີໄລຍະຫົກ (6) ຫາ ຫົກສິບ (60) ເດືອນ ແລະ ມີອັດຕາດອກເບ້ຍ 4.00% ຫາ 6.72%.

ເງິນຝາກມີກໍານົດໃນສະກຸນເງິນໂດລາ ທີ່ມີໄລຍະສາມ (3) ຫາ ຊາວສີ່ (24) ເດືອນ ແລະ ມີອັດຕາດອກເບ້ຍ 2.60% ຫາ 5.80%.

## 18. ໜີ້ຕ້ອງສົ່ງໃຫ້ລູກຄ້າ

ເງິນຝາກ ແລະ ໜີ້ຕ້ອງຈ່າຍອື່ນໆໃຫ້ແກ່ລູກຄ້າ ນະວັນທີ 31 ທັນວາ 2021 ມີດັ່ງນີ້:

| | *31/12/2021*<br>*ລ້ານກີບ* | *31/12/2020*<br>*ລ້ານກີບ* |
|---|---|---|
| **ເງິນຝາກກະແສລາຍວັນ** | **96,632** | **64,844** |
| - ເງິນກີບ | 27,564 | 34,062 |
| - ເງິນຕາຕ່າງປະເທດ | 69,068 | 30,782 |
| **ເງິນຝາກປະຢັດ** | **61,428** | **75,086** |
| - ເງິນກີບ | 28,239 | 31,505 |
| - ເງິນຕາຕ່າງປະເທດ | 33,189 | 43,581 |
| **ເງິນຝາກມີກຳນົດ** | **904,986** | **725,444** |
| - ເງິນກີບ | 275,058 | 238,237 |
| - ເງິນຕາຕ່າງປະເທດ | 629,928 | 487,207 |
| **ເງິນຝາກຄ້ຳປະກັນ** | **433** | **1,932** |
| - ເງິນກີບ | - | 964 |
| - ເງິນຕາຕ່າງປະເທດ | 433 | 968 |
| **ໜີ້ຕ້ອງສົ່ງໃຫ້ລູກຄ້າອື່ນໆ** | **2,875** | - |
| - ເງິນກີບ | 2,208 | - |
| - ເງິນຕາຕ່າງປະເທດ | 667 | - |
| | **1,066,354** | **867,306** |

## 18. ໜີ້ຕ້ອງສົ່ງໃຫ້ລູກຄ້າ (ຕໍ່)

ອັດຕາດອກເບ້ຍຕ້ອງຈ່າຍໃຫ້ລູກຄ້າໃນທ້າຍປີມີດັ່ງນີ້:

| | *31/12/2021*<br>*ອັດຕາດອກເບ້ຍ*<br>*% ຕໍ່ປີ* | *31/12/2020*<br>*ອັດຕາດອກເບ້ຍ*<br>*% ຕໍ່ປີ* |
|---|---|---|
| ເງິນຝາກກະແສລາຍວັນ ສະກຸນເງິນກີບ | 1.00 - 1.30 | 0.00 - 1.00 |
| ເງິນຝາກກະແສລາຍວັນ ສະກຸນເງິນໂດລາ | 0.00 - 0.50 | 0.00 - 0.50 |
| ເງິນຝາກກະແສລາຍວັນ ສະກຸນເງິນບາດ | 0.00 - 0.30 | 0.00 - 0.30 |
| ເງິນຝາກປະຢັດ ສະກຸນເງິນກີບ | 0.00 - 1.89 | 0.00 - 1.89 |
| ເງິນຝາກປະຢັດ ສະກຸນເງິນໂດລາ | 0.50 - 1.00 | 0.50 - 1.00 |
| ເງິນຝາກປະຢັດ ສະກຸນເງິນບາດ | 0.30 - 1.00 | 0.30 - 1.00 |
| ເງິນຝາກປະຈຳ ສະກຸນເງິນກີບ | 1.89 – 6.90 | 1.89 – 6.90 |
| ເງິນຝາກປະຈຳ ສະກຸນເງິນໂດລາ | 1.30 - 6.35 | 1.30 – 6.35 |
| ເງິນຝາກປະຈຳ ສະກຸນເງິນບາດ | 1.00 - 6.05 | 1.00 - 6.05 |

## 19. ດອກເບ້ຍຄ້າງຈ່າຍ

| | *31 ທັນວາ 2021*<br>*ລ້ານກີບ* | *31 ທັນວາ 2020*<br>*ລ້ານກີບ* |
|---|---|---|
| ດອກເບ້ຍຄ້າງຈ່າຍ ສຳລັບ: | | |
| ທະນາຄານ ແລະ ສະຖາບັນການເງິນອື່ນ | 12,990 | 10,548 |
| ເງິນຝາກຂອງລູກຄ້າ | 20,514 | 14,565 |
| | **33,504** | **25,113** |

## 20. ອາກອນ

### *20.1 ອາກອນ(ມອບລ່ວງໜ້າ)/ຄ້າງມອບ*

| | *31 ທັນວາ 2021*<br>*ລ້ານກີບ* | *31 ທັນວາ 2020*<br>*ລ້ານກີບ* |
|---|---|---|
| ອາກອນກຳໄລ(ມອບລ່ວງໜ້າ)/ຄ້າງມອບ | (771) | 222 |
| ອາກອນເງິນເດືອນຄ້າງມອບ | 399 | 240 |
| ອາກອນອື່ນໆ | 242 | 10 |
| | **(130)** | **472** |

## 20. ອາກອນ (ຕໍ່)

### *20.2 ອາກອນກຳໄລ*

ທະນາຄານມີພັນທະຕ້ອງຈ່າຍອາກອນໃນອັດຕາ 20% ຂອງກຳໄລທັງໝົດກ່ອນຫັກອາກອນພາຍໃນປີ ໂດຍອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019, ເຊິ່ງມີຜົນບັງຄັບໃຊ້ແຕ່ວັນທີ ຫຼື ຫຼັງຈາກວັນທີ 1 ມັງກອນ 2020. ອາກອນກຳໄລປີ 2021 ແມ່ນຖືກຄິດໄລ່ ດັ່ງລຸ່ມນີ້:

| | *2021* | *2020* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ກຳໄລກ່ອນອາກອນ** | **9,343** | **7,989** |
| ລົບ: | | |
| ລາຍການທີ່ບໍ່ຖືເປັນລາຍຮັບ | - | - |
| ບວກ: | | |
| ລາຍການທີ່ບໍ່ຖືເປັນລາຍຈ່າຍ | 137 | 5 |
| **ກຳໄລທາງອາກອນ** | **9,480** | **7,994** |
| ລາຍຈ່າຍອາກອນກຳໄລໃນປີ, ໃນອັດຕາຕາມກົດໝາຍ 20% (2020: 20%) | 1,989 | 1,598 |
| ດັດແກ້ລາຍຈ່າຍອາກອນສຳລັບປີທີ່ຜ່ານມາ | 194 | - |
| **ລາຍຈ່າຍອາກອນກຳໄລໃນປີ** | **2,183** | **1,598** |
| ໜີ້ຕ້ອງສົ່ງອາກອນກຳໄລຕົ້ນປີ | 240 | 414 |
| ອາກອນກຳໄລທີ່ໄດ້ຈ່າຍພາຍໃນປີ | (3,194) | (1,772) |
| **ໜີ້ຕ້ອງສົ່ງອາກອນກຳໄລທ້າຍປີ** | **(771)** | **240** |

ການແຈ້ງເສຍອາກອນຂອງທະນາຄານຕ້ອງໄດ້ຮັບການກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ, ຍ້ອນວ່າການນຳໃຊ້ກົດໝາຍສ່ວຍສາອາກອນ ແລະ ລະບຽບການຕ່າງໆແມ່ນມີຫຼາຍປະເພດເຊິ່ງອາດຈະແປຄວາມໄດ້ເປັນຫຼາຍຢ່າງ, ຈຳນວນທີ່ໄດ້ຖືກລາຍງານຢູ່ໃນເອກະສານລາຍງານການເງິນອາດຈະມີການປ່ຽນແປງຂຶ້ນກັບການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

## 21. ໜີ້ສິນອື່ນໆ

| | 31/12/2021 | 31/12/2020 |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ໜີ້ຕ້ອງສົ່ງໃຫ້ຜູ້ສະໜອງ | 5,136 | 4,460 |
| ລາຍຮັບຄ່າເຊົ່າລໍຖ້າຕັດບັນຊີ | 110 | 111 |
| ໜີ້ຕ້ອງສົ່ງໃຫ້ພະນັກງານ | 1 | 5 |
| | **5,247** | **4,576** |

## 22. ເງິນສົດ ແລະ ທຽບເທົ່າເງິນສົດ

| | 31/12/2021 | 31/12/2020 |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ເງິນສົດໃນຄັງ | 28,824 | 27,450 |
| ເງິນຝາກຢູ່ ທຫລ | 463,505 | 145,130 |
| ເງິນຝາກກະແສລາຍວັນກັບສະຖາບັນສິນເຊື່ອອື່ນ | 566,401 | 263,635 |
| | **1,058,730** | **436,215** |

## 23. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງປະກອບດ້ວຍລາຍການທຸລະກຳທັງໝົດທີ່ດຳເນີນການໂດຍພາກສ່ວນອື່ນໆທີ່ກ່ຽວຂ້ອງກັບທະນາຄານ, ພາກສ່ວນຈະກ່ຽວຂ້ອງກັບທະນາຄານຖ້າວ່າ:

(ກ) ພາກສ່ວນທີ່ທຳໜ້າທີ່ທາງກົງ ຫຼື ທາງອ້ອມໂດຍຜ່ານຄົນກາງຄົນໜຶ່ງ ຫຼື ຫຼາຍຄົນ ດັ່ງລຸ່ມນີ້:

- ຄວບຄຸມ, ຖືກຄວບຄຸມ ຫຼື ຢູ່ໃຕ້ການຄວບຄຸມລວມກັບທະນາຄານ (ໃນນີ້ລວມມີ ທະນາຄານສຳນັກງານໃຫຍ່, ສາຂາ ແລະ ຄູ່ສາຂາ);
- ມີຜົນປະໂຫຍດໃນທະນາຄານ ທີ່ມີອິດທິພົນທີ່ສຳຄັນຕໍ່ທະນາຄານ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມທະນາຄານ.

(ຂ) ພາກສ່ວນທີ່ຮ່ວມລົງທຶນກັບທະນາຄານ;

(ຄ) ພາກສ່ວນທີ່ເປັນສະມາຊິກຄົນສຳຄັນໃນຄະນະບໍລິຫານຂອງທະນາຄານ ຫຼື ຂອງທະນາຄານສຳນັກງານໃຫຍ່,

(ງ) ພາກສ່ວນທີ່ເປັນສະມາຊິກຢ່າງໃກ້ຊິດຂອງຄອບຄົວຂອງບຸກຄົນທີ່ໄດ້ອ້າງອີງໃນຂໍ້ (ກ) ຫຼື (ຄ);

(ຈ) ພາກສ່ວນທີ່ເປັນທະນາຄານທີ່ຖືກຄວບຄຸມ, ຄວບຄຸມຮ່ວມ ຫຼື ມີອິດທິພົນສຳຄັນ ຫຼື ຜູ້ທີ່ມີສິດໃນການລົງຄະແນນສຽງທີ່ສຳຄັນເຊັ່ນ: ທະນາຄານແຕ່ງຕັ້ງໂດຍກົງ ຫຼື ທາງອ້ອມ, ກັບບຸກຄົນທີ່ລະບຸໃນຂໍ້ (ຄ) ຫຼື (ງ); ຫຼື

(ສ) ພາກສ່ວນທີ່ເປັນຜົນປະໂຫຍດຂອງພະນັກງານໃນທະນາຄານ, ຫຼື ທະນາຄານອື່ນໆທີ່ກ່ຽວຂ້ອງກັບພາກສ່ວນຂອງທະນາຄານ.

## 24. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງນະວັນທີ 31 ທັນວາ 2021 ມີດັ່ງນີ້:

| *ພາກສ່ວນກ່ຽວຂ້ອງ* | *ສາຍພົວພັນ* | *ລາຍການເຄື່ອນໄຫວ* | *ໜີ້ຕ້ອງຮັບ ລ້ານກີບ* | *ໜີ້ຕ້ອງຮັບ ລ້ານກີບ* |
|---|---|---|---|---|
| ທະນາຄານ ຮຸ້ນສ່ວນການຄ້າ | ສຳນັກງານໃຫຍ່ | ເງິນຝາກກະແສລາຍວັນ | 541,231 | - |
| ໄຊງ່ອນເທືອງຕື່ນ | | ໜີ້ຕ້ອງສົ່ງ | - | 224,120 |
| ທະນາຄານ ຊາຄອມແບັງ | | | | |
| ສາຂາກຳປູເຈຍ | ບໍລິສັດໃນເຄືອ | ເງິນຝາກ | 1 | - |
| ທະນາຄານ ຊາຄອມແບັງ ຣີມີ ແທນສ ເອັກສເພຣສ | | | | |
| | ບໍລິສັດໃນເຄືອ | ໜີ້ຕ້ອງຮັບ | 343 | - |

ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງພາຍໃນປີມີດັ່ງນີ້:

| *ພາກສ່ວນກ່ຽວຂ້ອງ* | *ສາຍພົວພັນ* | *ລາຍການເຄື່ອນໄຫວ* | *ປີປັດຈຸບັນ ລ້ານກີບ* | *ປີຜ່ານມາ ລ້ານກີບ* |
|---|---|---|---|---|
| ທະນາຄານຫຸ້ນສ່ວນການຄ້າ ໄຊງ່ອນເທືອງຕື່ນ | ສຳນັກງານໃຫຍ່ | ລາຍຮັບດອກເບ້ຍ | 421 | 45 |
| ຄ່າຕອບແທນ | ສະພາອຳນວຍການ ແລະ ຄະນະ ບໍລິຫານ | ເງິນເດືອນ ແລະ ໂບນັດ | 3,175 | 3,376 |

## 25. ພາລະຜູກພັນໃນການເຊົ່າ

| | *31/12/2021 ລ້ານກີບ* | *31/12/2020 ລ້ານກີບ* |
|---|---|---|
| ແຕ່ 1 ປີ ຫາ 5 ປີ | 1,486 | 1,921 |
| ຫຼາຍກວ່າ 5 ປີ | 4,475 | 6,476 |
| | **5,961** | **8,398** |

## 25. ພາລະຜູກພັນໃນການເຊົ່າ (ຕໍ່)

*ການດຳເນີນຄະດີ*

ນະວັນທີ ຂອງເອກະສານລາຍງານການເງິນ, ທະນາຄານມີສອງຄະດີທີ່ຕິດພັນກັບຄະດີແພ່ງ ແລະ ຄະດີອາຍາທີ່ກ່ຽວຂ້ອງກັບທຸລະກຳການກູ້ຢືມເງິນຂອງລູກຄ້າ. ທັງສອງຄະດີນີ້ພວມຢູ່ໃນຂັ້ນຕອນຂອງການລິເລີ່ມ ແລະ ກະກຽມດຳເນີນຄະດີ, ອີງຕາມການປະເມີນຂອງທະນາຄານ, ນີ້ແມ່ນການສໍ້ໂກງສ່ວນບຸກຄົນທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບຂອງອະດີດຮອງຜູ້ອຳນວຍການໃຫຍ່. ທະນາຄານບໍ່ໄດ້ບັນທຶກເງິນແຮ ຫຼື ໜີ້ສິນທີ່ຕິດພັນກັບຄະດີເຫຼົ່ານີ້. ທະນາຄານຈະສືບຕໍ່ຕິດຕາມຄວາມຄືບໜ້າຢ່າງໃກ້ຊິດ ແລະ ເມື່ອມີການຕັດສິນຂັ້ນສຸດທ້າຍຈາກເຈົ້າໜ້າທີ່ທີ່ກ່ຽວຂ້ອງ, ທະນາຄານຈະດຳເນີນການດັດແກ້ຕາມຄວາມຈຳເປັນຕື່ມອີກໃນໄລຍະຕໍ່ໄປ.

## 26. ເຫດການທີ່ເກີດຂຶ້ນພາຍຫຼັງວັນທີຂອງໃບລາຍງານຖານະທາງການເງິນ

ບໍ່ມີເຫດການໃດເກີດຂຶ້ນນັບຕັ້ງແຕ່ວັນທີ31 ທັນວາ 2021 ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນ.

| ກະກຽມໂດຍ: | ກວດກາໂດຍ: | ອະນຸມັດໂດຍ: |
|---|---|---|
| ທ່ານ Hoang Thanh Lam | ທ່ານ ນາງ ອຸໄລພອນ ໂສເງິນ | ທ່ານ Pham Quang Phu |
| ຫົວໜ້າບັນຊີ-ບໍລິຫານ | ຮອງຜູ້ອຳນວຍການໃຫຍ່ | ຜູ້ອຳນວຍການໃຫຍ່ |

ນະຄອນຫຼວງວຽງຈັນ, ສປປ ລາວ

13 ພຶດສະພາ 2022

EY | Assurance | Tax | Transactions | Advisory

## About EY

EY is a global leader in assurance, tax, transaction and advisory services. The insights and quality services we deliver help build trust and confidence in the capital markets and in economies the world over. We develop outstanding leaders who team to deliver on our promises to all of our stakeholders. In so doing, we play a critical role in building a better working world for our people, for our clients and for our communities.

EY refers to the global organization, and may refer to one or more, of the member firms of Ernst & Young Global Limited, each of which is a separate legal entity. Ernst & Young Global Limited, a UK company limited by guarantee, does not provide services to clients. For more information about our organization, please visit ey.com.

© 2019 Ernst & Young Lao Co., Limited.
All Rights Reserved.

SCORE No.
ED MMYY

This material has been prepared for general informational purposes only and is not intended to be relied upon as accounting, tax or other professional advice. Please refer to your advisors for specific advice.

ey.com